ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL P.O.BOX 101
OFFICE TEL: (85621) 415645, FAX / TEL: (85621) 262 984 , WEBSITE.SOUVANNY.COM, FACEBOOK.SOUVANNY HOME CENTER

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທີ 0322/ສວນ

ນະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2019

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

- ອີງຕາມ: ກົດລະບຽບ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສະບັບລົງວັນທີ 9 ຕຸລາ 2015; ແລະ
- ອີງຕາມ: ມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 1/2019 ວັນທີ 22 ກຸມພາ 2019.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (**"ບໍລິສັດ"**) ຂໍເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໃນວັນທີ 5 ເມສາ 2019 ເວລາ 14.00 ໂມງ (ເລີ່ມລົງທະບຽນ ເວລາ 13.00 ໂມງ). ຢູ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ນອກຈາກນີ້ບໍລິສັດຍັງໄດ້ແຈ້ງວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ແລະ ເອກະສານຄັດຕິດເພື່ອໃຊ້ໃນການພິຈາລະນາ ແລະ ລົງຄະແນນສຽງທັງໝົດນັ້ນ ໄດ້ຖືກເຜີຍແຜ່ໂດຍບໍລິສັດ ຜ່ານເວັບໄຊທ໌ຂອງບໍລິສັດ (www.souvanny.com) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la) ລວມທັງໄດ້ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດໃນການເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໃນວັນທີ 11 ມີນາ 2019 ເຊິ່ງໄດ້ເປີດເຜີຍຂໍ້ມູນໃຫ້ບັນດາທ່ານຊາບແລ້ວ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ

ຂໍສະແດງຄວາມນັບຖື

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ທ່ານ ອຸ່ນ ຫຼ້າສຸກັນ
ປະທານສະພາບໍລິຫານ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL P.O.BOX 101
OFFICE TEL: (85621) 415645, FAX / TEL: (85621) 262 984 , WEBSITE.SOUVANNY.COM, FACEBOOK.SOUVANNY HOME CENTER

ໜັງສືເຊີນປະຊຸມສາມັນຜູ້ຖືຮຸ້ນ
ປະຈຳປີ 2018

ວັນສຸກ ທີ 05 ເມສາ 2019
ເວລາ 14.00 ໂມງ
ຢູ່ທີ ຫ້ອງປະຊຸມໃຫຍ່ ຊັ້ນ 8
ອາຄານຕະຫຼາດຫຼັກຊັບລາວ,
ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ,
ນະຄອນຫຼວງວຽງຈັນ, ສປປ ລາວ

ເອກະສານປະກອບໜັງສືເຊີນປະຊຸມຜູ້ຖືຮຸ້ນ ປະຈຳປີ 2018

1. ໜັງສືເຊີນປະຊຸມຜູ້ຖືຮຸ້ນ
2. ໜັງສືມອບສິດ
3. ລາຍຊື່, ຄວາມໝາຍ ແລະ ປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ
4. ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ
5. ເອກະສານປະກອບວາລະທີ 1: ບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017
6. ເອກະສານປະກອບວາລະທີ 2: ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2018
7. ເອກະສານປະກອບວາລະທີ 3: ແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019
8. ເອກະສານປະກອບວາລະທີ 6: ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ
9. ແຜນທີ່ສະຖານທີ່ຈັດປະຊຸມ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL P.O.BOX 101
OFFICE TEL: (85621) 415645, FAX / TEL: (85621) 262 984 , WEBSITE.SOUVANNY.COM, FACEBOOK.SOUVANNY HOME CENTER

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ເລກທີ 0323./ສວນ
ນະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2019

ເຖິງ: ຜູ້ຖືຮຸ້ນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ເລື່ອງ: ຂໍເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018

ຂໍເປັນກຽດຮຽນເຊີນທ່ານຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ໃນວັນທີ 05 ເມສາ 2019 ເວລາ 14.00 ໂມງ (ເລີ່ມລົງທະບຽນ ເວລາ 13.00 ໂມງ). ຢູ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີວາລະກອງປະຊຸມດັ່ງຕໍ່ໄປນີ້:

1. **ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 (ເອກະສານປະກອບວາລະທີ 1)**

   <u>ວັດຖຸປະສົງ ແລະ ເຫດຜົນ</u>: ເພື່ອໃຫ້ຜູ້ຖືຮຸ້ນໄດ້ພິຈາລະນາຮັບຮອງບົດລາຍງານກອງປະຊຸມວ່າຖືກຕ້ອງກົງກັບເນື້ອໃນຈິດໃຈຂອງກອງປະຊຸມ ໂດຍບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ມີລາຍລະອຽດຕາມເອກະສານປະກອບວາລະທີ 1

   <u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາບົດລາຍງານກອງປະຊຸມຜູ້ຖືຮຸ້ນ ເຊິ່ງຖືກຕ້ອງກົງກັບເນື້ອໃນຈິດໃຈຂອງກອງປະຊຸມ.

   <u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

2. **ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2018 (ເອກະສານປະກອບວາລະທີ 2)**

   <u>ວັດຖຸປະສົງ ແລະ ເຫດຜົນ</u>: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາບົດສະຫຼຸບກ່ຽວກັບການດຳເນີນທຸລະກິດ ແລະ ບົດລາຍງານການເງິນປະຈຳປີຂອງບໍລິສັດ" ໂດຍລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018 ມີລາຍລະອຽດ (ເອກະສານປະກອບວາລະທີ 2)

   <u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2018 ເຊິ່ງໄດ້ຜ່ານການພິຈາລະນາຂອງສະພາບໍລິຫານ ແລະ ຜ່ານການກວດສອບຈາກຜູ້ກວດສອບບັນຊີແລ້ວ.

   <u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

3. **ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019 (ເອກະສານປະກອບວາລະທີ 3)**

   <u>ວັດຖຸປະສົງ ແລະ ເຫດຜົນ</u>: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ "ກອງປະຊຸມສາມັນຜູ້ຖືຮຸ້ນມີສິດ ແລະ ໜ້າທີ່ໃນການຮັບຮອງເອົາແຜນການດຳເນີນທຸລະ

ກິດຂອງບໍລິສັດ ປະຈຳປີ 2019" ໂດຍແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019 ມີລາຍລະອຽດຕາມ (ເອກະສານປະກອບວາລະທີ 3)

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2019 ເຊິ່ງໄດ້ຜ່ານການພິຈາລະນາຂອງຄະນະອຳນວຍການ ແລະ ສະພາບໍລິຫານແລ້ວ

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

4. **ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018**

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 155 ກຳນົດໃຫ້ "ການແບ່ງເງິນປັນຜົນຕ້ອງໄດ້ຮັບຄວາມເຫັນດີຈາກກອງປະຊຸມຜູ້ຖືຮຸ້ນກ່ອນ" ແລະ ກົດລະບຽບຂອງບໍລິສັດ ສະບັບລົງວັນທີ 9 ຕຸລາ 2015 ມາດຕາ 16 ກຳນົດໃຫ້ "ນອກຈາກຄັງສຳຮອງຕາມລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 156 ຂອງກົດໝາຍວ່າດ້ວຍວິສາຫະກິດ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຕົກລົງກ່ຽວກັບການສ້າງຄັງສຳຮອງອື່ນ ຄື ຄັງສະສົມ 10%"

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າໃນຊຸມປີ 2018 ທີ່ຜ່ານມາ ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຈຳນວນ 3,190,561,575 ກີບ ເມື່ອຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມ ລວມທັງໝົດ ຈຳນວນ 20 ສ່ວນຮ້ອຍຂອງກຳໄລສຸດທິແລ້ວ ເຫຼືອຈຳນວນ 2,552,449,260 ກີບ, ຈຶ່ງເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນອະນຸມັດໃຫ້ມີການຈ່າຍເງິນປັນຜົນໃນອັດຕາ 8 ກີບຕໍ່ຮຸ້ນ, ຈຳນວນເງິນປັນຜົນທັງໝົດ 1,276,224,630 ກີບ ແລະ ກຳນົດຈ່າຍເງິນປັນຜົນແມ່ນ ວັນທີ 03 ພຶດສະພາ 2019

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

5. **ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີພາຍນອກ ປີ 2019**

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ "ສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນແມ່ນ ການເລືອກຕັ້ງຜູ້ກວດສອບບັນຊີ ແລະ ຕົກລົງຄ່າບໍລິການກວດສອບບັນຊີ"

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າກອງປະຊຸມຜູ້ຖືຮຸ້ນຄວນແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດຜູ່ດຽວ (PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2019 ໂດຍມີຄ່າບໍລິການເປັນເງິນຈຳນວນບໍ່ກາຍ 40,000 ໂດລາສະຫະລັດ. ເນື່ອງຈາກ, ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດຜູ່ດຽວ ແມ່ນເປັນຜູ້ກວດສອບບັນຊີໃຫ້ແກ່ບໍລິສັດມາແຕ່ການປະກາດຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າບໍລິການນັ້ນ ກໍ່ເປັນຈຳນວນທີ່ເໝາະສົມກັບວຽກງານໃນການກວດກາບັນຊີຂອງບໍລິສັດ ເຊິ່ງມີຈຳນວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້ ຈຶ່ງມີຄວາມຈຳເປັນ

ຕ້ອງນຳໃຊ້ບຸຄະລາກອນທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍເປັນຜູ້ກວດສອບຈາກຕ່າງປະເທດນຳ

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ

<u>ວັດຖຸປະສົງ ແລະ ເຫດຜົນ</u>: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 125 ກຳນົດໃຫ້ “ສະມາຊິກສະພາບໍລິຫານຂອງບໍລິສັດມີອາຍຸການສອງປີ ແລະ ສາມາດເລືອກຕັ້ງຄືນໃໝ່ໄດ້” ເຊິ່ງໃນກອງປະຊຸມເທື່ອນີ້ສະມາຊິກສະພາບໍລິຫານຂອງບໍລິສັດທັງໝົດ 9 ທ່ານ ໄດ້ດຳລົງຕຳແໜ່ງຄົບສອງປີແລ້ວ ໃນການນີ້ບໍລິສັດໄດ້ເຮັດປະກາດ ເລື່ອງການສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ລົງວັນທີ 4 ກຸມພາ 2019 ປະກາດລົງຊ່ອງທາງການຕິດຕໍ່ສື່ສານຜ່ານເວັບໄຊ້ຂອງຕະຫຼາດຫຼັກຊັບ ເພື່ອໃຫ້ຜູ້ຖືຮຸ້ນໄດ້ມີສ່ວນຮ່ວມໃນວຽກງານບໍລິຫານຂອງບໍລິສັດ ແຕ່ບໍ່ມີຜູ້ໃດສະເໜີເທື່ອ .

<u>ຄຳເຫັນຂອງສະພາບໍລິຫານ</u>: ໃນກອງປະຊຸມສະພາບໍລິຫານຂອງບໍລິສັດ ຄັ້ງທີ 1/2019 ເຊິ່ງຈັດຂຶ້ນໃນວັນທີ 22 ກຸມພາ 2019 ກອງປະຊຸມມີມະຕິໃຫ້ເລືອກຕັ້ງສະມາຊິກສະພາບໍລິຫານທັງ 9 ທ່ານ ຄືນໃໝ່ ໂດຍໃຫ້ມີອາຍຸການສອງປີ

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.1 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນຮອງປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນຮອງປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.2 ພິຈາລະນາການແຕ່ງຕັ້ງ ທ່ານ ພິພົບ ວາດສະໜາອາຊາສະກຸນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ພິພົບ ວາດສະໜາອາຊາສະກຸນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.3 ພິຈາລະນາການແຕ່ງຕັ້ງ ທ່ານ ປະດິດ ວົງເສນາ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ປະດິດ ວົງເສນາ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ

ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.4 **ພິຈາລະນາການແຕ່ງຕັ້ງ ທ່ານ ບຸນເຕີມ ກົມມິດຕະພາບ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ**

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ບຸນເຕີມ ກົມມິດຕະພາບ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.5 **ພິຈາລະນາການແຕ່ງຕັ້ງ ທ່ານ ວັດດານາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ**

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ວັດດານາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.6 **ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ຊຸຕິການ ສີແສງຈັນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ**

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ນາງ ຊຸຕິການ ສີແສງຈັນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.7 **ພິຈາລະນາການແຕ່ງຕັ້ງ ທ່ານ ຄຳພອນ ພິລະພັນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ**

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ຄຳພອນ ພິລະພັນ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.8 **ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ວຽງດາລາ ບຸບຜາ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດ**

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ນາງ ວຽງດາລາ ບຸບຜາ ເປັນສະມາຊິກສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

<u>ຄະແນນສຽງທີ່ຕ້ອງໃຊ້</u>: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

6.9 **ພິຈາລະນາການແຕ່ງຕັ້ງ ທ່ານ ອຸ່ນ ຫຼ້າສຸກັນ ເປັນປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດ**

<u>ຄຳເຫັນຂອງສະພາບໍລິຫານ</u>: ເຫັນດີໃຫ້ແຕ່ງຕັ້ງ ທ່ານ ອຸ່ນ ຫຼ້າສຸກັນ ເປັນປະທານສະພາບໍລິຫານຊຸດໃໝ່ຂອງບໍລິສັດໂດຍມີອາຍຸການສອງປີ ລາຍລະອຽດປະຫວັດໂດຍຫຍໍ້ປາກົດຕາມເອກະສານປະກອບວາລະທີ 6

ຄະແນນສຽງທີ່ຕ້ອງໃຊ້: ກົດໝາຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ

7. **ພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ**

ວັດຖຸປະສົງ ແລະ ເຫດຜົນ: ກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 154 ກຳນົດໃຫ້ "ສິດ ແລະ ໜ້າທີ່ຂອງກອງປະຊຸມຜູ້ຖືຮຸ້ນແມ່ນ ຕົກລົງເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານຂອງບໍລິສັດ".

ຄຳເຫັນຂອງສະພາບໍລິຫານ: ເຫັນວ່າຄວນອະນຸມັດໃຫ້ເຫຼືອແຕ່ເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກ ສະພາບໍລິຫານສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະ ຂອງບໍລິສັດ.

1. ເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະເທື່ອ ສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ

- ປະທານສະພາບໍລິຫານ 3,000,000 ກີບ ຕໍ່ 1 ຄັ້ງ;
- ຮອງປະທານສະພາບໍລິຫານ 2,000,000 ກີບ ຕໍ່ 1 ຄັ້ງ; ແລະ
- ສະມາຊິກສະພາບໍລິຫານ 2,000,000 ກີບ ຕໍ່ 1 ຄັ້ງ.

ຄະແນນສຽງທີ່ຕ້ອງໃຊ້: ອີງໃສ່ກົດໝາຍ ວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ໄດ້ກຳນົດໄວ້ວ່າ ວາລະນີ້ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງ ປະຊຸມ.

8. **ເລື່ອງອື່ນໆ (ຖ້າມີ)**

ວາລະກອງປະຊຸມ ແລະ ຄຳເຫັນຂອງສະພາບໍລິຫານດັ່ງກ່າວຂ້າງຕົ້ນນັ້ນ ສະມາຊິກອິດສະຫຼະບໍ່ມີຄຳເຫັນເປັນຢ່າງອື່ນ ສຳລັບການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ທາງບໍລິສັດຈະເຊີນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດ ຫຼັກຊັບລາວ, ຜູ້ກວດສອບບັນຊີພາຍນອກ ແລະ ແຕ່ງຕັ້ງຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນ ສຽງ ແລະ ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເພື່ອເປັນສັກຂີພະຍານ ແລະ ຊ່ວຍດູແລກວດສອບ ໃຫ້ກອງປະຊຸມເປັນໄປຢ່າງຖຸກຕ້ອງ, ໂປ່ງໃສ ຕາມກົດລະບຽບຂອງບໍລິສັດ ແລະ ກົດໝາຍທີ່ກ່ຽວຂ້ອງໃນ ສປປ ລາວ

ຈຶ່ງຂໍຮຽນເຊີນທ່ານຜູ້ຖືຮຸ້ນເຂົ້າຮ່ວມປະຊຸມຕາມວັນ ເວລາ ແລະ ສະຖານທີ່ດັ່ງກ່າວຂ້າງເທິງ

ຂໍສະແດງຄວາມນັບຖື

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ອຸ່ນ ຫຼ້າສຸກັນ
ປະທານສະພາບໍລິຫານ

ໝາຍເຫດ

1. ຜູ້ຖືຮຸ້ນທຸກທ່ານຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ເລີ່ມຕັ້ງແຕ່ວັນທີ 1 ເມສາ 2019, ຢູ່ ອາຄານຕະຫຼາດຫຼັກຊັບ ລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນເໜືອ, ຖະໜົນ T4, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເລກໂທລະສັບ: (856-21) 454361-4, ແຟັກ: (856-21) 454 361-4 ຫຼື ຕິດຕໍ່ໂດຍກົງ ທ່ານ ສຸພອນ ປ້ອງສີບຸນທຳ, ໂທລະສັບ (856-20) 5819 5968; Line ID: @ust8320q.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະແດງໃນວັນປະຊຸມດ້ວຍ. ຢ່າງໃດກໍ່ຕາມ, ກະລຸນາເບິ່ງເອກະສານຄັດຕິດ ເລື່ອງ ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ;
3. ຫາກທ່ານບໍ່ສະດວກທີ່ຈະໄປຮ່ວມປະຊຸມດ້ວຍຕົນເອງຈະມອບສິດໃຫ້ບຸກຄົນອື່ນໄປເຂົ້າຮ່ວມປະຊຸມແທນກໍໄດ້ ໂດຍມອບສິດໃຫ້ຕາມແບບທີ່ແນບມາພ້ອມໜັງສືນີ້ ແລະ ນຳມາມອບໃຫ້ປະທານກອງປະຊຸມ ຫຼື ຜູ້ທີ່ປະທານກອງປະຊຸມມອບໝາຍກ່ອນຜູ້ຮັບມອບສິດເຂົ້າຮ່ວມກອງປະຊຸມ ເຊິ່ງຜູ້ຮັບມອບສິດຕ້ອງນຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນຄົນຕ່າງປະເທດ) ມາສະແດງໃນວັນປະຊຸມດ້ວຍ. ຢ່າງໃດກໍ່ຕາມ, ກະລຸນາເບິ່ງເອກະສານຄັດຕິດ ເລື່ອງເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ;
4. ໃນກໍລະນີທີ່ຜູ້ຖືຮຸ້ນຈະມອບໝາຍໃຫ້ສະມາຊິກອິດສະຫຼະຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສິດດັ່ງກ່າວ ແລະ ໝາຍ (✓) ເພື່ອເລືອກເອົາສະມາຊິກອິດສະຫຼະຂອງບໍລິສັດ ທ່ານໃດທ່ານໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສິດດັ່ງກ່າວພ້ອມເອກະສານປະກອບ ສົ່ງເຖິງ ທ່ານ ມິດໄຊ ເປື້ອງກາງ ທີ່ ຫ້ອງການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ,ຖະໜົນ ໂພນຕ້ອງ, ບ້ານ ໂພນສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທ +856-21 562 497 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 4 ເມສາ 2019. ຢ່າງໃດກໍ່ຕາມ, ກະລຸນາເບິ່ງເອກະສານຄັດຕິດ ເລື່ອງ ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນເພີ່ມຕື່ມ; ແລະ
5. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສິດ ລວມທັງລາຍລະອຽດໃນໜັງສືເຊີນປະຊຸມສະບັບນີ້ ທ່ານສາມາດສອບຖາມ ທ່ານ ມິດໄຊ ເປື້ອງກາງ ແລະ ທ່ານ ອິນທິລາດ ທຳມະວົງ ເບີໂທ +856-21 562 497.

ໜັງສືມອບສິດ

ຂຽນທີ .....
ວັນທີ ..... ເດືອນ ..... ປີ .....

(1) ຂ້າພະເຈົ້າ ..... ສັນຊາດ ..... ວັນທີ ເດືອນ ແລະ ປີເກີດ .....
ບັດປະຈຳຕົວເລກທີ ..... ຫຼື ໜັງສືຜ່ານແດນ ເລກທີ ..... ຢູ່ເຮືອນເລກທີ .....
ບ້ານ ..... ຖະໜົນ ..... ເມືອງ .....
ແຂວງ ..... ປະເທດ .....;

(2) ເປັນຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ ນ ເຊ ິ່ ງ ເທົ່າກັບຈຳນວນທີ່ຈະລົງຄະແນນສຽງໄດ້;

(3) ຂໍມອບໝາຍໃຫ້ ;

ທ່ານ/ທ່ານ ນາງ ..... ອາຍຸ ..... ປີ, ບັດປະຈຳຕົວເລກທີ .....
ຫຼື ໜັງສືຜ່ານແດນ ເລກທີ ....., ຢູ່ ເຮືອນເລກທີ .....ຖະໜົນ .....
ບ້ານ ..... ເມືອງ ..... ແຂວງ .....ລະຫັດໄປສະນີ .....,
ປະເທດ .....

ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໃນວັນ ທີ 05 ເມສາ 2019 ເວລາ 14.00 ໂມງ ຢູ່ທີ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຫຼື ມື້ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມ ດັ່ງນີ້:

- **ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;**
  ☐ ຜູ້ມອບສິດອະນຸມັດ ☐ ຜູ້ມອບສິດບໍ່ອະນຸມັດ
- **ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ແລະ ມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໃນບາງວາລະ ດັ່ງ ລຸ່ມນີ້ (ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້); ຫຼື**

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ແລະ ບົດລາຍງານການເງິນຂອງ ບໍລິສັດ ປະຈຳປີ 2018;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 4: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 5: ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີພາຍນອກ ປີ 2019;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 6: ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ;

- ທ່ານ ນາງ ປະພັດສອນ ສຸຄະບັນດິດ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ພິພັບ ວາດສະໜາອາຊາສະກຸນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ປະດິດ ວົງເສນາ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ບຸນເຕີມ ກົມມິດຕະພາບ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ວັດດານາ ສຸຄະບັນດິດ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ນາງ ຊຸດິການ ສີແສງຈັນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ຄຳພອນ ພິລະພັນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ນາງ ວຽງດາລາ ບຸບຜາ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

- ທ່ານ ອຸ່ນ ຫຼ້າສຸກັນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

ວາລະທີ 7: ພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ.
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ ☐ ອະນຸມັດໃຫ້ສິດຜູ້ຕ່າງໜ້າລົງຄະແນນຕາມເຫັນສົມຄວນ

❖ **ໃຫ້ຜູ້ຕ່າງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ ດັ່ງລຸ່ມນີ້(ກະລຸນາຕື່ມຂໍ້ມູນດ້ານລຸ່ມນີ້)**

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ແລະ ບົດລາຍງານການເງິນຂອງ ບໍລິສັດ ປະຈຳປີ 2018;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 3: ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 4: ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2018;
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 5: ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີພາຍນອກ ປີ 2019;

☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 6: ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານທີ່ຄົບວາລະ;

- ທ່ານ ນາງ ປະພັດສອນ ສຸຄະບັນດິດ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ພິພົບ ວາດສະໜາອາຊາສະກຸນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ປະດິດ ວົງເສນາ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ບຸນເຕີມ ກິມມິດຕະພາບ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ວັດດານາ ສຸຄະບັນດິດ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ນາງ ຊຸຕິການ ສີແສງຈັນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ຄຳພອນ ພິລະພັນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ນາງ ວຽງດາລາ ບຸບຜາ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

- ທ່ານ ອຸ່ນ ຫຼ້າສຸກັນ
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

ວາລະທີ 7: ພິຈາລະນາ ແລະ ອະນຸມັດເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ.
☐ ຜູ້ມອບສິດເຫັນດີ ☐ ຜູ້ມອບສິດບໍ່ເຫັນດີ

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະການປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໜັງສືມອບສິດສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າໃນຖານະຜູ້ຖືຮຸ້ນ;

(6) ໃນກໍລະນີທີ່ຂ້າພະເຈົ້າບໍ່ໄດ້ລະບຸຄວາມປະສົງໃນການອອກສຽງລົງຄະແນນໃນວາລະໃດໄວ້ ຫຼື ລະບຸໄວ້ບໍ່ຊັດເຈນ ຫຼື ໃນກໍລະນີທີ່ກອງປະຊຸມມີການພິຈາລະນາ ຫຼື ລົງມະຕິໃນເລື່ອງໃດນອກເໜືອຈາກເລື່ອງທີ່ລະບຸໄວ້ຂ້າງຕົ້ນ ລວມເຖິງກໍລະນີທີ່ມີການແກ້ໄຂປ່ຽນແປງ ຫຼື ເພີ່ມເຕີມຂໍ້ເທັດຈິງໃດໜຶ່ງ ໃຫ້ຜູ້ຮັບມອບສິດມີສິດພິຈາລະນາ ແລະ ລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; ແລະ

(7) ກິດຈະການໃດທີ່ຜູ້ຮັບມອບສິດໄດ້ເຮັດໄປໃນການປະຊຸມນັ້ນ ໃຫ້ຄືກັນກັບວ່າຂ້າພະເຈົ້າໄດ້ເຮັດເອງທຸກປະການ.

ລົງລາຍເຊັນ ..... ຜູ້ມອບສິດ

(.....)

ລົງລາຍເຊັນ ..... ຜູ້ຮັບມອບສິດ

(.....)

ລົງລາຍເຊັນ ..... ພະຍານ

(.....)

ລົງລາຍເຊັນ ..... ພະຍານ

(.....)

ລົງລາຍເຊັນ ..... ພະຍານ

(.....)

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງທ່ານດຽວເປັນຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້; ແລະ
2. ໜັງສືມອບສິດນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບສິດ ແລະ ຜູ້ຕາງໜ້າໃນທາງກົດໝາຍ ຕາມກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009. ຢ່າງໃດກໍຕາມ, ໃນກໍລະນີທີ່ໜັງສືມອບສິດສະບັບນີ້ຫາກບໍ່ໄດ້ຈົດທະບຽນສານ ແລະ ໄດ້ຍື່ນຕໍ່ບໍລິສັດ, ບໍລິສັດຈະບໍ່ຮັບຜິດຊອບໃດໜຶ່ງໃນຄວາມຂັດແຍ່ງທີ່ເກີດຂຶ້ນລະຫວ່າງຜູ້ມອບສິດ ແລະ ຜູ້ຮັບມອບສິດ

ລາຍຊື່, ຄວາມໝາຍ ແລະ ປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ

ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012 ແລະ ລະບຽບ ວ່າດ້ວຍການອອກຈຳໜ່າຍ ຮຸ້ນ ເລກທີ 018/ຄຄຊ, ລົງວັນທີ 27 ມິຖຸນາ 2015 ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໃຫ້ບໍລິສັດຈົດທະບຽນຕ້ອງມີສະມາຊິກອິດສະຫຼະຢ່າງໜ້ອຍ 1 ໃນ 3 ຂອງສະມາຊິກສະພາບໍລິຫານທັງໝົດ ທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ ເຊິ່ງບໍ່ມີສ່ວນພົວພັນກັບຜົນປະໂຫຍດຂອງບໍລິສັດ ແລະ ສາມາດປະກອບຄຳເຫັນຢ່າງເປັນເອກະລາດ. ໃນກໍລະນີຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມີສະມາຊິກອິດສະຫຼະຈຳນວນ 3 ທ່ານ ຈາກຈຳນວນສະມາຊິກສະພາບໍລິຫານທັງໝົດ 9 ທ່ານ ມີລາຍຊື່ ດັ່ງລຸ່ມນີ້

1. ທ່ານ ອຸ່ນ ຫຼ້າສຸກັນ — ປະທານສະພາບໍລິຫານ, ປະທານຄະນະກຳມະການກວດກາພາຍໃນ ແລະ ປະທານສະມາຊິກອິດສະຫຼະ;
2. ທ່ານ ບຸນເຕີມ ກົມມິດຕະພາບ — ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ສະມາຊິກອິດສະຫຼະ; ແລະ
3. ທ່ານ ປະດິດ ວົງເສນາ — ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ສະມາຊິກອິດ ສະຫຼະ

ໂດຍປະຫວັດຫຍໍ້ຂອງສະມາຊິກອິດສະຫຼະແມ່ນເປັນໄປຕາມເອກະສານຕໍ່ທ້າຍນີ້



ຊື່ - ນາມສະກຸນ	ທ່ານ ອຸ່ນ ຫຼ້າສຸກັນ
ອາຍຸ	69 ປີ
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາຕີ ຂະແໜງເສດຖະກິດ ແລະ ແຮງງານ ທີ່ ໂຮງຮຽນ ມະຫາວິທະຍາໄລກຳມະບານ, ຂະແໜງເສດຖະກິດແຮງງານ, ສາທາລະນະລັດສັງຄົມນິຍົມຫວຽດນາມ.
ປະສົບການເຮັດວຽກ	- ຫົວໜ້າຫ້ອງການ, ອົງການໄອຍະການປະຊາຊົນສູງສຸດ; - ຮອງຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ; - ຜູ້ຊ່ວຍລັດຖະມົນຕີວ່າການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ຕຳແໜ່ງງານໃນປະຈຸບັນ	ປະທານສະພາບໍລິຫານ, ປະທານຄະນະກຳມະການກວດກາພາຍໃນ ແລະ ປະທານ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.
ວັນທີຮັບຕຳແໜ່ງ	17 ກຸມພາ 2017
ລັກສະນະຄວາມສຳພັນ	**ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ** - ບໍ່ມີ - **ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍ ວັດສະດຸກໍ່ສ້າງ** - ບໍ່ມີ - **ການມີຄວາມສຳພັນເປັນຍາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ** - ບໍ່ມີ - **ການມີຄວາມສຳພັນທາງທຸລະກິດ ເຊັ່ນ ການຊື້-ຂາຍ ວັດຖຸດິບ, ສິນຄ້າ ,ການກູ້ຍືມເງິນ ນຳ ບໍລິສັດ** - ບໍ່ມີ -

ການເຂົ້າຮ່ວມປະຊຸມ

ປີ 2015	- ສະພາບໍລິຫານ	1/1 ຄັ້ງ
	- ຄະນະກຳມະການກວດກາພາຍໃນ	1/1 ຄັ້ງ
ປີ 2016	- ສະພາບໍລິຫານ	2/2 ຄັ້ງ
ປີ 2017	- ສະພາບໍລິຫານ	3/3 ຄັ້ງ
ປີ 2018	- ສະພາບໍລິຫານ	2/2 ຄັ້ງ



ຊື່ - ນາມສະກຸນ	ທ່ານ ປະດິດ ວົງເສນາ
ອາຍ	56 ປີ
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາໂທ ວິດສະວະກອນເສດຖະກິດ ແລະ ການເງິນ ຈາກສະຖາບັນວິສະວະກອນເສດຖະກິດລັດ ຢູເຄຣນ ໃນສາຂາວິຊາ ການບັນຊີ ກວດກາ ແລະ ວິໄຈເສດຖະກິດ.
ການອົບຮົມຕ່າງໆ	- ທີ່ປຶກສາບັນຊີ ຊຸດທີ 1 (CPA) ຈັດໂດຍ ສະພາການບັນຊີ ແຫ່ງປະເທດຝະລັ່ງເສດ ຮ່ວມກັບກະຊວງການເງິນ. - ການຫັນທຸລະກິດໄປສູ່ຮູບການກຳມະສິດອື່ນ ຈັດໂດຍ ທະນາຄານໂລກ ແລະ ລັດຖະບານແຫ່ງ ສປປ ລາວ. - ການນຳໃຊ້ຄອມພິວເຕີ ຈັດໂດຍ ສະຖາບັນວິດທະຍາສາດເອເຊຍ (AIT)
ປະສົບການເຮັດວຽກ	- ວຽກງານກວດສອບບັນຊີປະຈຳປີ ໃຫ້ແກ່ບໍລິສັດເອກະຊົນຕ່າງໆ; - ວຽກງານທີ່ປຶກສາດ້ານການຄຸ້ມຄອງບໍລິຫານ ຫຼື ບັນຊີ; - ວຽກງານສ້າງຄູ່ມື ແລະ ຝຶກອົບຮົມ; ແລະ - ວຽກງານການສຶກສາ ເຊັ່ນ ເປັນອາຈານຮັບເຊີນ ໃຫ້ແກ່ສະຖາບັນການສຶກສາລະດັບວິທະຍາໄລ.
ຕຳແໜ່ງງານໃນປະຈຸບັນ	- ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ - ຜູ້ຖືຮຸ້ນ ແລະ ຜູ້ອຳນວຍການ ບໍລິສັດ VPS Accounting Service ຈຳກັດ
ວັນທີຮັບຕຳແໜ່ງ	17 ກຸມພາ 2017
ລັກສະນະຄວາມສຳພັນ	**ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ** - ບໍ່ມີ - **ການເປັນຜູ້ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ** - ບໍ່ມີ - **ການມີຄວາມສຳພັນເປັນຍາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ້ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ** - ບໍ່ມີ - **ການມີຄວາມສຳພັນທາງທຸລະກິດ ເຊັ່ນ ການຊື້-ຂາຍ ວັດຖຸດິບ, ສິນຄ້າ ,ການກູ້ຍືມເງິນ ນຳບໍລິສັດ** - ບໍ່ມີ -

ການເຂົ້າຮ່ວມປະຊຸມ

ປີ 2015	- ສະພາບໍລິຫານ	1/1 ຄັ້ງ
	- ຄະນະກຳມະການກວດກາພາຍໃນ	1/1 ຄັ້ງ
ປີ 2016	- ສະພາບໍລິຫານ	2/2 ຄັ້ງ
ປີ 2017	- ສະພາບໍລິຫານ	3/3 ຄັ້ງ
ປີ 2018	- ສະພາບໍລິຫານ	2/2 ຄັ້ງ
	- ຄະນະກຳມະການກວດກາພາຍໃນ	3/3 ຄັ້ງ



ຊື່ - ນາມສະກຸນ	ທ່ານ ບຸນເຕີມ ກົມມິດຕະພາບ
ອາຍຸ	64 ປີ
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາຕີ ດ້ານກົດໝາຍຍຸຕິທຳ ຈາກ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ
ປະສົບການເຮັດວຽກ	- ຮັບຜິດຊອບວຽກງານບໍລິຫານກະຊວງຍຸຕິທຳ - ຮັບຜິດຊອບວຽກງານການເງິນທີ່ຄະນະນິຕິສາດລັດຖະສາດ - ຫົວໜ້າພະແນກສັງລວມ-ກວດກາ - ຜູ້ພິພາກສາຫົວໜ້າຄະນະສານ
ຕຳແໜ່ງງານໃນປະຈຸບັນ	- ສະມາຊິກສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ວັນທີຮັບຕຳແໜ່ງ	22 ກຸມພາ 2019
ລັກສະນະຄວາມສຳພັນ	**ການຖືຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ** - ບໍ່ມີ - **ການເປັນຜູ່ອຳນວຍການໃນກິດຈະການທີ່ແຂ່ງຂັນ ຫຼື ກ່ຽວເນື່ອງກັບທຸລະກິດຈຳໜ່າຍວັດສະດຸກໍ່ສ້າງ** - ບໍ່ມີ - **ການມີຄວາມສຳພັນເປັນຢາດພີ່ນ້ອງນຳສະມາຊິກສະພາບໍລິຫານ/ຜູ່ຖືຮຸ້ນລາຍໃຫຍ່/ຄະນະກຳມະການບໍລິຫານຂອງບໍລິສັດ** - ບໍ່ມີ - **ການມີຄວາມສຳພັນທາງທຸລະກິດ ເຊັ່ນ ການຊື້-ຂາຍ ວັດຖຸດິບ, ສິນຄ້າ ,ການກູ້ຍືມເງິນ ນຳບໍລິສັດ** - ບໍ່ມີ -

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງ

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ ແລະ ກະກຽມເອກະສານຕາມທີ່ກຳນົດດ້ານລຸ່ມນີ້ມາພ້ອມ. ຢ່າງໃດກໍ່ຕາມ, ບໍລິສັດຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້

ເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ

(1.) ກໍລະນີຜູ້ຖືຮຸ້ນທີ່ເປັນບຸກຄົນທຳມະດາ.

(1.1.) ຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງ ໃຫ້ສະແດງເອກະສານທີ່ລັດຖະການອອກໃຫ້ ເຊິ່ງປາກົດພາບຖ່າຍຂອງຜູ້ຖືຮຸ້ນ ແລະ ຍັງບໍ່ໝົດອາຍຸເທື່ອ ເຊັ່ນ ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ)

(1.2.) ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

- ໜັງສືມອບສິດ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີປະຊຸມ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງຂອງຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ;
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍຕາມຂໍ້ 1.1.1 ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ; ແລະ
- ເອກະສານທີ່ທາງລັດຖະການອອກໃຫ້ຂອງຜູ້ຕາງໜ້າເຊິ່ງປາກົດພາບຖ່າຍ ແລະ ຍັງບໍ່ໝົດອາຍຸເທື່ອ ເຊັ່ນ ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2.) ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນ.

(2.1.) ກໍລະນີຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້:

- ເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ; ແລະ
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງມີຂໍ້ຄວາມສະແດງໃຫ້ເຫັນວ່າຜູ້ອຳນວຍການຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່

ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ (ຖ້າມີ).

(2.2.) ກໍລະນີຜູ້ຖືຮຸ້ນມອບສິດໃຫ້ຜູ້ຕາງໜ້າ (ຜູ້ທີ່ບໍ່ແມ່ນຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ) ເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານ ດັ່ງລຸ່ມນີ້ ແລະ ປະຕິບັດຕາມວິທີການມອບໝາຍຕາມທີ່ໄດ້ແຈ້ງໃນເອກະສານຄັດຕິດຂອງໜັງສືເຊີນປະຊຸມນີ້:

- ໜັງສືມອບສິດຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ເຊິ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນເຊິ່ງເປັນຜູ້ຖືຮຸ້ນ ພ້ອມປະທັບກາບໍລິສັດ (ຖ້າມີ) ໂດຍໃຫ້ຂຽນຊື່ແຈ້ງຂອງຜູ້ມອບສິດ ແລະ ຜູ້ຮັບມອບສິດ;
- ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບຂອງບໍລິສັດ ແລະ ໃບທະບຽນອາກອນ (ປີລ່າສຸດ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ເຊິ່ງມີຂໍ້ຄວາມສະແດງໃຫ້ເຫັນວ່າ ຜູ້ອຳນວຍການຂອງນິຕິບຸກຄົນທີ່ລົງລາຍເຊັນ ມີອຳນາດກະທຳການຜູກພັນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ພ້ອມປະທັບກາບໍລິສັດ (ຖ້າມີ);
- ສຳເນົາເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ອຳນວຍການທີ່ມີອຳນາດກະທຳການຜູກພັນນິຕິບຸກຄົນ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ເຊິ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ອຳນວຍການທ່ານດັ່ງກ່າວ; ແລະ
- ເອກະສານທີ່ທາງລັດຖະການອອກໃຫ້ ແລະ ປາກົດພາບຖ່າຍຂອງຜູ້ຕາງໜ້າ ເຊິ່ງຍັງບໍ່ໝົດອາຍຸເທື່ອ ເຊັ່ນ: ບັດປະຈຳຕົວ, ໃບອະນຸຍາດຂັບລົດ ຫຼື ໜັງສືຜ່ານແດນ (ໃນກໍລະນີທີ່ເປັນບຸກຄົນຕ່າງປະເທດ) ໃນກໍລະນີທີ່ມີການປ່ຽນຊື່ - ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

<u>ໝາຍເຫດ:</u> ໃນກໍລະນີທີ່ຜູ້ຖືຮຸ້ນເປັນບຸກຄົນຕ່າງປະເທດໃຫ້ປະຕິບັດຕາມຂໍ້ (1.) ຫຼື ຂໍ້ (2.) ແລ້ວແຕ່ກໍລະນີ ເຊິ່ງຫາກເອກະສານດັ່ງກ່າວເປັນພາສາອື່ນ ນອກເໜືອຈາກພາສາລາວ ຫຼື ພາສາອັງກິດ ຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ໂດຍໃຫ້ບຸກຄົນທຳມະດາ ຫຼື ຜູ້ອຳນວຍການທີ່ມີອຳນາດລົງລາຍເຊັນຜູກພັນນິຕິບຸກຄົນນັ້ນລົງລາຍເຊັນຮັບຮອງສະບັບແປພາສາດັ່ງກ່າວດ້ວຍ

<u>ການມອບໝາຍ</u>

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການ ດັ່ງນີ້:

(1.) ມອບໝາຍໃຫ້ຜູ້ໃດຜູ້ໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ສະມາຊິກອິດສະຫຼະຂອງສະພາບໍລິຫານຂອງບໍລິສັດທ່ານໃດທ່ານໜຶ່ງ ໂດຍໃຫ້ລະບຸຊື່ພ້ອມກາເຄື່ອງໝາຍ ✓ ລົງໃນຊ່ອງ ☐ ໜ້າຊື່ຜູ້ຮັບມອບສິດຕາມທີ່ລະບຸໄວ້ໃນໃບມອບສິດ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບສິດໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ; ແລະ

(2.) ນຳສົ່ງໜັງສືມອບສິດຄືນ ທ່ານ ມິດໄຊ ເປື້ອງກາງ ທີ່ ຫ້ອງການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ,ຖະໜົນ ໂພນຕ້ອງ, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທ +856-21 562 497 ແລະ ກະລຸນາສົ່ງເຖິງບໍລິສັດກ່ອນວັນທີ 04 ເມສາ 2019 ຫຼື ນຳສົ່ງໜ້າສະຖານທີ່ຈັດກອງປະຊຸມກ່ອນເວລາເປີດກອງປະຊຸມຢ່າງໜ້ອຍ 1 ຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

<u>ການລົງທະບຽນ</u>

ບໍລິສັດເປີດຮັບລົງທະບຽນ ຕັ້ງແຕ່ເວລາ 13.00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

(1.) ກໍລະນີມາດ້ວຍຕົນເອງ

(1.1.) ໃຫ້ຕິດຕໍ່ຈຸດລົງທະບຽນ ແລະ ສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ; ແລະ

(1.2.) ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມວາລະ.

(2.) ກໍລະນີມອບສິດໃຫ້ບຸກຄົນອື່ນ

(2.1.) ໃຫ້ຕິດຕໍ່ຈຸດກວດເອກະສານ ພ້ອມທັງສະແດງເອກະສານ ແລະ ຫຼັກຖານທີ່ຕ້ອງໃຊ້ໃນການສະເໜີໂຕເຂົ້າຮ່ວມກອງປະຊຸມ;

(2.2.) ຕິດຕໍ່ຈຸດລົງທະບຽນ ຍື່ນເອກະສານຕາມຂໍ້ (2.1) ຂ້າງຕົ້ນ ເຊິ່ງໄດ້ຜ່ານການກວດສອບແລ້ວ;

(2.3.) ຮັບເອກະສານຮັບຮອງການລົງທະບຽນ ແລະ ບັດອອກສຽງລົງຄະແນນແຍກຕາມວາລະ (ສະເພາະກໍລະນີຜູ້ມອບສິດບໍ່ໄດ້ອອກສຽງລົງຄະແນນໄວ້ໃນໜັງສືມອບສິດ).

ການລົງຄະແນນສຽງ ແລະ ການນັບຜົນການລົງຄະແນນສຽງ

(1.) ການລົງຄະແນນສຽງ:

- ຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

  ▯ ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.

  ▯ ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

(2.) ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມານັບເປັນຄະແນນສຽງຕື່ມອີກ.

ເອກະສານປະກອບວາລະທີ 1: ຍົກລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

ບົດລາຍງານບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

ຂອງ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

("ບໍລິສັດ")

<u>ເວລາ ແລະ ສະຖານທີ່</u>

ກອງປະຊຸມຈັດຂຶ້ນໃນວັນທີ 06 ເມສາ 2018 ເວລາ 14.00 ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບ ລາວບ້ານ ໂພນທັນເໜືອ, ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

<u>ກ່ອນເປີດກອງປະຊຸມ</u>

ທ່ານ ອຸ່ນ ຫຼ້າສຸກັນ ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ໃນຄັ້ງນີ້. ກອງປະຊຸມມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 54 ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 35 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 89 ທ່ານ ເຊິ່ງຖືຮຸ້ນລວມກັນທັງໝົດ 149.799.700 ຮຸ້ນ ຫຼື ເທົ່າກັບ 90.79 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ, ປະທານຈຶ່ງໄດ້ກ່າວເປີດກອງປະຊຸມ ແລະ ໄດ້ມອບໝາຍໃຫ້ພິທີກອນແນະນຳ ສະມາຊິກສາພາບໍລິຫານ, ລວມທັງເຈົ້າໜ້າທີ່ທີ່ກ່ຽວຂ້ອງແຕ່ລະທ່ານທີ່ເຂົ້າຮ່ວມກອງປະຊຸມ ລາຍລະອຽດມີດັ່ງຕໍ່ໄປນີ້:

(1.) ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ

1.1.	ທ່ານ ອຸ່ນ	ຫຼ້າສຸກັນ	ຕຳແໜ່ງ:	ປະທານສະພາບໍລິຫານ;
1.2.	ທ່ານ ນາງ ປະພັດສອນ	ສຸຄະບັນດິດ	ຕຳແໜ່ງ:	ຮອງປະທານສະພາບໍລິຫານ;
1.3.	ທ່ານ ອັດດາມາ	ສຸຄະບັນດິດ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ;
1.4.	ທ່ານ ຄຳກົ່ງ	ລ່ຽມພຣະຈັນ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ;
1.5.	ທ່ານ ປະດິດ	ວົງເສນາ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ;
1.6.	ທ່ານ ພິພົບ	ວາດສະໜາອາຊາສະກຸນ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ;
1.7.	ທ່ານ ນາງ ຊຸຕິການ	ສີແສງຈັນ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ;
1.8.	ທ່ານ ນາງ ວຽງດາລາ	ບຸບຜາ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ; ແລະ
1.9.	ທ່ານ ຄຳພອນ	ພິລະພັນ	ຕຳແໜ່ງ:	ສະມາຊິກສະພາບໍລິຫານ.

(2.) ເຈົ້າໜ້າທີ່ທີ່ກ່ຽວຂ້ອງ

2.1.	ທ່ານ ອະພິສິດ ທ່ຽງຕຣົງພົນໂຍ	ຜູ້ຕາງໜ້າຈາກບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປ້ີ້ສ (ລາວ)
	ທ່ານ ນິຕິ ປັນຍາວິສິດກຸນ	ຜູ້ຕາງໜ້າຈາກບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປ້ີ້ສ (ລາວ)
2.2.	ທ່ານ ບຸນຖຶມ ຟອງວິລາດ	ຜູ້ຕາງໜ້າຈາກ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ,
	ທ່ານ ອານົນ ໄຊຍະວົງ	ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ;

2.3.	ທ່ານ ນາງ ພອນສະຫວັນ ພອນປະເສີດ	ຜູ້ຕາງໜ້າຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຫົວໜ້າຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;
2.4.	ທ່ານ ວິງປະເສີດ ແສງວິງເດືອນ	ຜູ້ຕາງໜ້າຈາກສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;
2.5.	ທ່ານ ນາງ ທິດາພອນ ແສງສິຣິຈັນ	ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ;
2.6.	ທ່ານ ອິນທິລາດ ທຳມະວົງ	ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ,ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ. .

ຫຼັງຈາກນັ້ນ ພິທີກອນໄດ້ລາຍງານແຕ່ລະວາລະຂອງການປະຊຸມໃນມື້ນີ້ ແລະ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບເຊິ່ງມີລາຍລະອຽດ ດັ່ງນີ້:

(1.) ວາລະກອງປະຊຸມ:

(1.1.) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016;

(1.2.) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2017;

(1.3.) ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018;

(1.4.) ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017;

(1.5.) ພິຈາລະນາ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2018;

(1.6.) ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ;

(1.7.) ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຮອງປະທານສະພາບໍລິຫານແທນຮອງປະທານສະພາບໍລິຫານຜູ້ເກົ່າທີ່ລາອອກໄປ;

(1.8.) ພິຈາລະນາ ແລະ ອະນຸມັດການຂໍປົດບໍລິການ ສາຂາ ທົ່ງຂັນຄຳ;

(1.9.) ພິຈາລະນາ ແລະ ອະນຸມັດຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ;

(1.10.) ພິຈາລະນາ ແລະ ອະນຸມັດແຕ່ງຕັ້ງຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກຳມະການກຳນົດຄ່າຕອບແທນ; ແລະ

(1.11.) ເລື່ອງອື່ນໆ (ຖ້າມີ).

(2.) ການລົງຄະແນນສຽງ:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະກອງປະຊຸມ ພິທີກອນຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ.

  ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ຫຼື ບໍ່ຮັບຮອງ ໃຫ້ທ່ານໝາຍເຄື່ອງໝາຍຄູນ (✖) ແລະ ຂຽນຊື່, ນາມສະກຸນ ລົງໃນບັດລົງຄະແນນໃນວາລະນັ້ນໆ ທີ່ມີເຄື່ອງໝາຍບາໂຄ້ດປະຈຳຕົວຜູ້ຖືຮຸ້ນແຕ່ລະທ່ານ ເຊິ່ງເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.

  ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກ ເວັ້ນ ກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ເຊິ່ງບໍລິສັດ ໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

(3.) ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມໄດ້ຮັບຊາບຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ເວລາຕໍ່ມາ, ທ່ານປະທານໃນກອງປະຊຸມໄດ້ດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ໂດຍໄດ້ລາຍງານເປັນແຕ່ລະວາລະ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

<u>ວາລະທີ 1.</u> **<u>ພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016</u>**

ປະທານສະພາບໍລິຫານໄດ້ສະເໜີໃຫ້ກອງປະຊຸມ ພິຈາລະນາ ແລະ ຮັບຮອງ ບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016 ເຊິ່ງກອງປະຊຸມໃນຄັ້ງນັ້ນແມ່ນມີຜູ້ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງທັງໝົດ 57 ທ່ານ ແລະ ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈຳນວນ 25 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 82 ທ່ານ ເຊິ່ງຖືຮຸ້ນລວມກັນທັງໝົດ 149.969.600 ຮຸ້ນ ຫຼື ເທົ່າກັບ 90.90 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຈຶ່ງຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ. ໂດຍມີລາຍລະອຽດມະຕິໃນແຕ່ລະວາລະ ດັ່ງຕໍ່ໄປນີ້:

- ວາລະທີ 1. ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2016 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2016.

  ມະຕິ: ກອງປະຊຸມເຫັນດີເປັນເອກະພາບໃຫ້ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2016 ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ 2016.
- ວາລະທີ 2. ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017.

  ມະຕິ: ກອງປະຊຸມເຫັນດີເປັນເອກະພາບໃຫ້ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017.
- ວາລະທີ 3. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2016.

  ມະຕິ: ກອງປະຊຸມເຫັນດີເປັນເອກະພາບ ອະນຸມັດໃຫ້ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ໃນປີ 2016 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ແມ່ນວັນທີ 9 ມີນາ 2017 ໃນອັດຕາ 20 ກີບຕໍ່ຮຸ້ນ ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 3.256.594.838 ກີບ ຄິດໄລ່ແລ້ວແມ່ນ 50 ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມໂດຍກຳນົດວັນຈ່າຍເງິນປັນຜົນແມ່ນວັນທີ 3 ພຶດສະພາ 2017.
- ວາລະທີ 4. ພິຈາລະນາ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2017.

  ມະຕິ: ກອງປະຊຸມເຫັນດີເປັນເອກະພາບໃຫ້ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກຸເປີ້ສ (ລາວ) ຈຳກັດ (PriceWaterHouseCoopers (Lao) Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2017 ໂດຍມີຄ່າຈ້າງເປັນເປັນເງິນບໍ່ກາຍ 50.000 ໂດລາສະຫະລັດ.
- ວາລະທີ 5. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ຄົບວາລະ.
- ວາລະທີ 5.1 ພິຈາລະນາການແຕ່ງຕັ້ງ ທ່ານ ວັດຕານາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ວັດດານາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.2 ພິຈາລະນາການແຕ່ງຕັ້ງ ທ່ານ ພັນໂນລາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ພັນໂນລາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.3 ພິຈາລະນາການແຕ່ງຕັ້ງ ທ່ານ ປະດິດ ວົງເສນາ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ປະດິດ ວົງເສນາ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳ ປີ 2016 ເຊິ່ງມີຜົນເປັນການຮັບຮອງຄຸນສົມບັດຂອງຜູ້ກ່ຽວ ເລື່ອງ ການເປັນຜູ້ຖືຮຸ້ນຫຼາຍກວ່າ 50 ສ່ວນຮ້ອຍ ໃນ ບໍລິສັດ VPS Accounting Service ຈຳກັດ ນຳ.

– ວາລະທີ 5.4 ພິຈາລະນາການແຕ່ງຕັ້ງ ທ່ານ ຄຳກົງ ລ່ຽມພຣະຈັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ຄຳກົງ ລ່ຽມພຣະຈັນ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.5 ພິຈາລະນາການແຕ່ງຕັ້ງ ທ່ານ ວິທູນ ສຸຣິຍະວະນາກຸນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ວິທູນ ສຸຣິຍະວະນາກຸນ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.6 ພິຈາລະນາການແຕ່ງຕັ້ງ ທ່ານ ອະຣິດ ຈິນຕະນາວັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ອະຣິດ ຈິນຕະນາວັນ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.7 ພິຈາລະນາການແຕ່ງຕັ້ງ ທ່ານ ກິດສະດາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ກິດສະດາ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານ ຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.8 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນສະມາຊິກສະພາ ບໍລິຫານຂອງບໍລິສັດຄືນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ ຖືຮຸ້ນ ປະຈຳປີ 2016.

– ວາລະທີ 5.9 ພິຈາລະນາການແຕ່ງຕັ້ງ ທ່ານ ອຸ່ນ ຫຼ້າສຸກັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ອຸ່ນ ຫຼ້າສຸກັນ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດຄົນໃໝ່ ໂດຍໃຫ້ມີອາຍຸການ 2 ປີ ນັບຈາກວັນທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳ ປີ 2016.

– ວາລະທີ 6. ພິຈາລະນາ ແລະ ອະນຸມັດຄ່າຕອບແທນຂອງສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ: ກອງປະຊຸມເຫັນດີເປັນເອກະພາບ ອະນຸມັດຄ່າຕອບແທນຂອງສະມາຊິກສະພາບໍລິຫານຕາມ ອັດຕາເກົ່າ ຕາມລາຍລະອຽດດັ່ງລຸ່ມນີ້.

1. ຄ່າຕອບແທນໃນການເດີນທາງມາຮ່ວມກອງປະຊຸມໃນແຕ່ລະເທື່ອ
   - ປະທານສະພາບໍລິຫານ 1.500.000 ກີບ ຕໍ່ 1 ຄັ້ງ;
   - ຮອງປະທານສະມາຊິກສະພາບໍລິຫານ 1.000.000 ກີບ ຕໍ່ 1 ຄັ້ງ; ແລະ
   - ສະມາຊິກສະພາບໍລິຫານ 1.000.000 ກີບ ຕໍ່ 1 ຄັ້ງ.
2. ເງິນເດືອນຂອງສະມາຊິກສະພາບໍລິຫານ ສະເພາະຜູ້ທີ່ເປັນສະມາຊິກອິດສະຫຼະເທົ່ານັ້ນ
   - ປະທານສະພາບໍລິຫານ 6.000.000 ກີບ ຕໍ່ເດືອນ/ທ່ານ;
   - ຮອງປະທານສະມາຊິກສະພາບໍລິຫານ 5.000.000 ກີບ ຕໍ່ເດືອນ/ທ່ານ; ແລະ
   - ສະມາຊິກສະພາບໍລິຫານ 5.000.000 ກີບ ຕໍ່ເດືອນ/ທ່ານ.

– ວາລະທີ 7 ພິຈາລະນາ ແລະ ອະນຸມັດໃຫ້ເພີ່ມວັດຖຸປະສົງຂອງບໍລິສັດ.

ມະຕິ: ກອງປະຊຸມເຫັນດີເປັນເອກະພາບ ອະນຸມັດໃຫ້ມີການເພີ່ມວັດຖຸປະສົງຂອງບໍລິສັດເພື່ອຈຳ ໜ່າຍສິນຄ້າ ດັ່ງຕໍ່ໄປນີ້:

1. ເຄື່ອງໃຊ້ໃນຊີວິດປະຈຳວັນ ເຊັ່ນ: ເຄື່ອງຄົວ, ເຄື່ອງນອນ ເປັນຕົ້ນ;
2. ສິນຄ້າທີ່ຮັບໃຊ້ວຽກງານກະສິກຳ ລວມເຖິງແຕ່ບໍ່ຈຳກັດພຽງ ຝຸ່ນ, ຢາປາບສັດຕູພືດ ແລະ ອັດ ສະດຸອຸປະກອນແນໃສ່ໃນວຽກງານກະສິກຳ ເປັນຕົ້ນ;
3. ລົດຖີບ ແລະ ອຸປະກອນຕ່າງໆທີ່ກ່ຽວຂ້ອງກັບລົດຖີບ;
4. ເຄື່ອງໃຊ້ໃນຫ້ອງການ; ແລະ
5. ເຄື່ອງສັງຄະທານ ເຊັ່ນ: ທູບ, ທຽນ, ເຄື່ອງກອງ ແລະ ຄຸສັງຄະທານ ເປັນຕົ້ນ.

ຫຼື ຄຳໃດໜຶ່ງຕາມທີ່ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ/ຫຼື ໜ່ວຍງານທີ່ກ່ຽວຂ້ອງເຫັນດີ ເພື່ອໃຫ້ບໍລິສັດມີວັດຖຸປະສົງ ແລະ ສາມາດ ຈຳໜ່າຍສິນຄ້າດັ່ງກ່າວຂ້າງເທິງໄດ້.

– ວາລະທີ 8 ພິຈາລະນາ ແລະ ອະນຸມັດໃຫ້ມີການແກ້ໄຂໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ເອກະສານທາງດ້ານທະບຽນຂອງບໍລິສັດ.

ມະຕິ: ກອງປະຊຸມເຫັນດີເປັນເອກະພາບ ອະນຸມັດໃຫ້ມີການແກ້ໄຂປ່ຽນແປງເອກະສານທາງ ທະບຽນຂອງບໍລິສັດ ໂດຍໃຫ້ມີຂໍ້ມູນຕາມການຕີລາຄາຂອງກອງປະຊຸມໃນເທື່ອນີ້.

ທັງນີ້, ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານກອງ ປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

ຫຼັງຈາກ ປະທານສະພາບໍລິຫານໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດ ເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ການໃຊ້ພາສາອັງກິດມີຫຼາຍຈຸດທີ່ ໃຊ້ຄຳ ສັບບໍ່ເໝາະສົມ ແລະ ບໍ່ສອດຄ່ອງກັບພາສາລາວເຊັ່ນ: ພາສາລາວຂຽນໄວ້ວ່າ ຕິດພາລະກິດ ແຕ່ພາສາອັງກິດຂຽນໄວ້ວ່າ ບໍ່ ວ່າງເປັນຕົ້ນ ເຊິ່ງຖືວ່າເປັນການບໍ່ໃຫ້ກຽດສະມາຊິກສະພາບໍລິຫານ.

- **ທ່ານ ປະທານກອງປະຊຸມ:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ເຊິ່ງເປັນຄຳເຫັນທີ່ຕິດພັນກັບວຽກງານວິຊາສະເພາະ, ມອບໃຫ້ຄະນະກອງເລຂາບັນທຶກ ແລະ ປະສານສົມທົບກັບພາກສ່ວນ ທີ່ກ່ຽວຂ້ອງເພື່ອຄົ້ນຄວ້າປັບປຸງ ແລະ ເຮັດໃຫ້ການແປພາສາສອດຄ່ອງດີຂຶ້ນກ່ອນເກົ່າ.

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ:

<u>ມະຕິ:</u> ຮັບຮອງເອົາບົດລາຍງານກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2016.

<u>ວາລະທີ 2. ພິຈາລະນາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017 ແລະ ບົດລາຍງານການເງິນຂອງ ບໍລິສັດ ປະຈຳປີ 2017.</u>

ປະທານສະພາບໍລິຫານໄດ້ຂໍໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2017 ເຊິ່ງຜ່ານການພິຈາລະນາຈາກສະພາບໍລິຫານ ແລະ ໄດ້ມີການກວດສອບໂດຍຜູ້ກວດສອບພາຍນອກແລ້ວ ໂດຍບໍລິສັດໄດ້ເປີດເຜີຍບົດລາຍງານຜົນການດຳເນີນທຸລະກິດຂອງ ບໍລິສັດ ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ 2017 ໄວ້ໃນເວັບໄຊຂອງບໍລິສັດ ແລະ ເວັບໄຊຕະຫຼາດຫຼັກຊັບລາວ ເຊິ່ງມີເນື້ອໃນສຳຄັນ ຕາມທີ່ ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ຈະໄດ້ລາຍ ງານ ດັ່ງນີ້:

ບໍລິສັດມີລາຍຮັບລວມໃນປີ 2016 ເທົ່າກັບ 274.023.501.981 ກີບ ເຊິ່ງໃນນັ້ນປະກອບມີລາຍຮັບຈາກການຂາຍເທົ່າກັບ 273.050.292.557 ກີບ ແລະ ລາຍຮັບຈາກການບໍລິການເທົ່າກັບ 973.209.424 ກີບ ໃນປີ 2017 ໄດ້ມີລາຍຮັບລວມ ເພີ່ມຂຶ້ນມາເປັນ 300.938.965.790 ກີບ ເຊິ່ງປະກອບມີລາຍຮັບຈາກການຂາຍເທົ່າກັບ 299.063.433.879 ກີບ ແລະ ລາຍຮັບຈາກການບໍລິການເທົ່າກັບ 1.875.531.911 ກີບ ເຫັນໄດ້ວ່າມີລາຍຮັບລວມເພີ່ມຂຶ້ນໃນອັດຕາສ່ວນ 9.82 ສ່ວນ ຮ້ອຍ ເມື່ອທຽບຈາກລາຍຮັບປີ 2016. ເນື່ອງຈາກວ່າ ບໍລິສັດໄດ້ມີການເພີ່ມກຸ່ມສິນຄ້າໃຫ້ຫຼາຍຂຶ້ນບວກກັບໄດ້ມີຍອດຂາຍ ຈາກສາຂາໃໝ່ເພີ່ມຂຶ້ນຕາມລຳດັບ. ບໍລິສັດມີກຳໄລສຸດທິໃນປີ 2016 ເທົ່າກັບ 8.141.487.097 ກີບ ແລະ ມີກຳໄລສຸດທິ ໃນປີ2017 ເທົ່າກັບ 4.260.029.000 ກີບ, ໃນປີ 2016 ມີອັດຕາກຳໄລສຸດທິເທົ່າກັບ 2.97 ສ່ວນຮ້ອຍ ແລະ ໃນປີ

2017 ມີອັດຕາກຳໄລສຸດທິຫຼຸດລົງເປັນ 1.42 ສ່ວນຮ້ອຍຂອງລາຍຮັບລວມ ສາເຫດຫຼັກທີ່ບໍລິສັດມີກຳໄລສຸດທິຫຼຸດລົງເກີດຈາກ ບໍລິສັດ ມີຄ່າໃຊ້ຈ່າຍໃນການຂາຍ, ຄ່າໃຊ້ຈ່າຍບໍລິຫານເພີ່ມຂຶ້ນຕາມການຂະຫຍາຍສາຂາ ແຕ່ສ່ວນໃຫຍ່ເປັນຄ່າເຊື່ອມທີ່ເພີ່ມຂຶ້ນໂດຍເຫັນໄດ້ຈາກຊັບສິນທີ່ເພີ່ມຂຶ້ນ ແລະ ມີລາຍຮັບກຳໄລຈາກອັດຕາແລກປ່ຽນຫຼຸດລົງ. ສ່ວນໃນດ້ານຊັບສິນລວມໃນ ວັນທີ 31 ທັນວາ 2016 ເທົ່າກັບ 535.904.649.928 ກີບ ໃນວັນທີ 31 ທັນວາ 2017 ເພີ່ມຂຶ້ນເປັນ 643.210.287.205 ກີບ, ການທີ່ມີຊັບສິນລວມເພີ່ມຂຶ້ນຍ້ອນວ່າ ບໍລິສັດໄດ້ມີການປຸກສ້າງອາຄານ ແລະ ຊື້ອຸປະກອນສຳລັບສາຂາໃໝ່ ເຊັ່ນ: ສາຂາໂຊກໃຫຍ່, ສາຂາປາກຊັນ, ສາຂາປາກເຊ ແລະ ສາຂາທ່າແຂກ (ຄຳມ່ວນ) ພ້ອມດຽວກັນນັ້ນເຄື່ອງສະຕ໋ອກໃນສາງກໍ່ເພີ່ມຂຶ້ນ ຕາມການຂະຫຍາຍສາຂາເຫຼົ້ານັ້ນ. ສ່ວນວ່າທາງດ້ານໜີ້ສິນລວມໄດ້ມີການເພີ່ມຂຶ້ນຈາກ 65.244.514.047 ກີບ ມາເປັນ 118.802.752.519 ກີບ ເຊິ່ງໜີ້ສິນສ່ວນໃຫຍ່ແມ່ນໜີ້ສິນ ໝູນວຽນເພື່ອການຄ້າ ແລະ ໜີ້ສິນເງິນກູ້ຢືມຈາກສະຖາບັນການເງິນ ໃນວັນທີ 31 ທັນວາ 2016 ລວມທຶນຈາກຜູ້ຖືຮຸ້ນທັງໝົດ ເທົ່າກັບ 470.660.135.881 ກີບ ເຊິ່ງໃນວັນທີ 31 ທັນວາ 2017 ເພີ່ມຂຶ້ນເປັນ 524.407.534.686 ກີບ ເຊິ່ງສາເຫດມາຈາກບໍລິສັດໄດ້ມີການຫັກເງິນສຳຮອງຕາມກົດໝາຍ ແລະ ເງິນສຳຮອງອື່ນໆ ຕາມລະບຽບການ ເຊິ່ງກຳໄລສະສົມໄດ້ເພີ່ມຂຶ້ນເລັກນ້ອຍຈາກ 150.388.294.678 ກີບ ເປັນ 150.496.317.879 ກີບ ເນື່ອງຈາກວ່າ ໄດ້ມີການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ2016 ໃຫ້ແກ່ຜູ້ຖືຮຸ້ນ ພ້ອມດຽວກັນນັ້ນຍັງມີກຳໄລສຸດທິຫຼຸດລົງ ຖ້າທຽບໃສ່ປີ 2016 ສາເຫດກໍ່ເພາະມີຄ່າໃຊ້ຈ່າຍເພີ່ມຂຶ້ນ ຍ້ອນການກຽມຄວາມພ້ອມໃນການຂະຫຍາຍທຸລະກິດ ເພື່ອໃຫ້ບັນລຸວັດຖຸປະສົງທີ່ວາງໄວ້.

ທ້າຍນີ້, ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017 ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ 2017.

ຫຼັງຈາກຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017 ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ 2017 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ:

<u>ມະຕິ:</u> ເຫັນດີ ແລະ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017 ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ 2017.

ວາລະທີ 3. ພິຈາລະນາແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018.

ປະທານສະພາບໍລິຫານໄດ້ສະເໜີແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018 ຕໍ່ກອງປະຊຸມໂດຍລາຍລະອຽດຫຼັກ ຂອງແຜນການດຳເນີນທຸລະກິດໃນການສ້າງຍອດຂາຍໃນປີ 2018 ແມ່ນເປັນໄປຕາມທີ່ ທ່ານ ອັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່ ຈະໄດ້ອະທິບາຍ ດັ່ງນີ້:

ວຽກງານດ້ານການຂາຍໃນປີ 2018 ບໍລິສັດມີແຜນທີ່ຈະສ້າງຍອດຂາຍໃຫ້ບັນລຸຕາມເປົ້າໝາຍຄື: ພາບລວມຂອງທຸລະກິດ ເຕີບໂຕທີ່ 20% ໃນນັ້ນ ສາຂາເກົ່າຮັກສາລະດັບການເຕີບໂຕທີ່ 5% ໂດຍມີການຂະຫຍາຍກຸ່ມສິນຄ້າໃຫ້ຫຼາກຫຼາຍຂຶ້ນ, ເນັ້ນ ຂະຫຍາຍຖານລູກຄ້າໃໝ່ ໃຫ້ເພີ່ມຂຶ້ນແຕ່ລະຊ່ອງທາງ ແລະ ຂະຫຍາຍຊ່ອງທາງການຈັດຈຳໜ່າຍໃຫ້ຫຼາກຫຼາຍ ແລະ ສະດວກຍິ່ງຂຶ້ນສຳລັບລູກຄ້າ ໂດຍການເພີ່ມຊ່ອງທາງ ການຂາຍອອນລາຍຫຼື E-commerce, ຊ່ອງທາງຂາຍແບບເງິນດາວ ໂດຍຜ່ານລະບົບການດາວ ຂອງ ບໍລິສັດ ອີອອນ ບໍລິການເຊົ່າສິນເຊື່ອ (ລາວ) ຈຳກັດ ແລະ ມີແຜນເປີດສາຂາໃໝ່ອີກ 2 ສາຂາ ຄື ສາຂາ ປາກເຊ ແລະ ສາຂາທ່າແຂກ

ໃນປີ 2018 ບໍລິສັດມີແຜນທີ່ຈະສ້າງການຮັບຮູ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໃຫ້ທົ່ວເຖິງໃນນະຄອນຫຼວງວຽງ ຈັນ 90% ແລະ ໃນແຂວງຕ່າງໆທົ່ວປະເທດໃຫ້ໄດ້ 70% ພ້ອມຍັງຈະສ້າງການຮັບຮູ້ສິນຄ້າພາຍໃນສູນວາງສະແດງສິນຄ້າ ຂອງ ບໍລິສັດໃຫ້ທົ່ວນະຄອນຫຼວງວຽງຈັນ 70% ແລະ ໃນແຂວງຕ່າງໆທົ່ວປະເທດ 50% ໂດຍການຜ່ານສື່ຕ່າງໆເຊັ່ນ: Website , Facebook , Line , IG , YouTube , ປ້າຍໂຄສະນາ, ໃບປິວ, ໂທລະສັບມືຖືເຂົ້າສູ່ລະບົບ, ວິທະຍຸ ແລະ ອື່ນໆ.

- ເລັ່ງຂະຫຍາຍ House Brand ໃຫ້ເພີ່ມຂຶ້ນເລື່ອຍໆ ເພື່ອໃຫ້ສາມາດໃນການແຂ່ງຂັນດ້ານລາຄາ ແລະ ສ້າງກຳໄລໃຫ້ສູງຂຶ້ນ
- ເຮັດກິດຈະກຳສົ່ງເສີມການຂາຍ ແບບຄົບວົງຈອນຄື: ການເຮັດໂປໂມຊັ່ນປະຈຳເດືອນ, ປະຈຳ 6 ເດືອນ, ແລະ ກິດຈະກຳ ສະສົມຄະແນນ ແລກຂອງລາງວັນ
- ເນັ້ນກິດຈະກຳຊ່ວຍເຫຼືອສັງຄົມໃຫ້ຫຼາຍຂຶ້ນ ໂດຍຜ່ານໂຄງການ: ສ້າງຮອຍຍິ້ມດ້ວຍການແບ່ງປັນ.

ພາຍຫຼັງໄດ້ກ້າວເຂົ້າເປັນ ບໍລິສັດ ມະຫາຊົນ ບໍລິສັດ ກໍ່ໄດ້ມີການປ່ຽນແປງ ຫຼາຍດ້ານ ເຊິ່ງໃນປີ 2018 ກໍ່ໄດ້ມີການປ່ຽນແປງ ດ້ານບໍລິການໃຫ້ມີຄຸນນະພາບ ແລະ ມີປະສິດຕິພາບຂຶ້ນຕື່ມ ພ້ອມດຽວກັນນັ້ນຍັງໃຫ້ຄວາມສຳຄັນ ດ້ານບຸກຄະລາກອນ ໂດຍຈະມີການຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ພະນັກງານ ເຊິ່ງຈະມີການຕິດຕາມການຝຶກອົບຮົມປະຈຳເດືອນ ໃນ ການໃຫ້ຄວາມຮູ້ດ້ານຕ່າງໆ ເພື່ອໃຫ້ພະນັກງານເຮັດວຽກໄດ້ຢ່າງມີປະສິດຕິພາບເຊັ່ນ: ພະນັກງານຂາຍຈະໄດ້ມີຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບ ສິນຄ້າແຕ່ລະປະເພດ ແລະ ມີຄວາມຮູ້ດ້ານເຕັກນິກການຂາຍໃນດ້ານຕ່າງໆ ໂດຍຈະມີການສຳມະນາ ຈາກຜູ້ຊຳນານງານ ຂອງແຕ່ລະຜູ້ສະໜອງຜັດປ່ຽນກັນມາໃຫ້ຄວາມຮູ້, ນອກຈາກນີ້ ຈະໄດ້ມີການຊຸກຍູ້ໃຫ້ພະນັກງານພາຍໃນ ໄດ້ມີຄວາມກ້າວໜ້າໃນດ້ານຕ່າງໆ ບໍ່ວ່າຈະເປັນການປ່ຽນຕຳແໜ່ງໃຫ້ພະນັກງານ ເພື່ອໃຫ້ເໝາະສົມກັບໜ້າວຽກຕົວຈິງ, ເໝາະສົມກັບຄວາມສາມາດຂອງແຕ່ລະຄົນ, ຍົກສູງພະນັກງານໃຫ້ມີການພັດທະນາຕົວເອງ ເພື່ອກ້າວຂຶ້ນໄປສູ່ລະດັບຜູ້ ຈັດການໃນແຕ່ລະພະແນກ ແລະ ເປັນຜູ້ຈັດການສາຂາອື່ນໆຕື່ມອີກ.

ດ້ານການລົງທຶນ ບໍລິສັດ ມີແຜນການທີ່ຈະຂະຫຍາຍສາຂາຫຼາຍແຫ່ງ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າໃຫ້ທົ່ວ ເຖິງ ເຊິ່ງໃນປີ 2018 ບໍລິສັດມີແຜນຈະຂະຫຍາຍ 3 ສາຂາ, ໂດຍມີລາຍລະອຽດດັ່ງລຸ່ມນີ້:

ລຳດັບ	ທີ່ຕັ້ງສາຂາ	ຂະໜາດ	ໄລຍະເວລາ
1	ບ້ານ ກາງ, ເມືອງ ປາກເຊ, ແຂວງ ຈຳປາສັກ	ເນື້ອທີ່ວາງສະແດງສິນຄ້າບໍ່ຕ່ຳກວ່າ 12.000 ຕາແມັດ, ເນື້ອທີ່ສາງປະມານ 6.000 ຕາແມັດ	ຕົ້ນປີ 2018
2	ບ້ານ ໂພນພິມ, ເມືອງ ທ່າແຂກ , ແຂວງ ຄຳມ່ວນ	ເນື້ອທີ່ວາງສະແດງສິນຄ້າບໍ່ຕ່ຳກວ່າ 10.000 ຕາແມັດ, ເນື້ອທີ່ສາງປະມານ 4.750 ຕາແມັດ	ທ້າຍປີ 2018
3	ບ້ານ ໂພນສ້າງເໜືອ, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ	ເນື້ອທີ່ວາງສະແດງສິນຄ້າບໍ່ຕ່ຳກວ່າ 13.000 ຕາແມັດ, ເນື້ອທີ່ສາງປະມານ 3.000 ຕາແມັດ	ຕົ້ນປີ 2019

ສຳລັບຍຸດທະສາດອົງກອນໃນປີ 2018, ບໍລິສັດຈະໄດ້ມີການປັບປຸງ ແລະ ເອົາໃຈໃສ່ເລື່ອງຂອງການນຳເທັກໂນໂລຍີເຂົ້າມາຊ່ວຍໃນການບໍລິຫານການຂາຍ ໂດຍການສ້າງ ແລະ ການພັດທະນາ ໂປຣແກຣມຕ່າງໆ ເຊິ່ງຈະເຮັດໃຫ້ເພີ່ມສັກກະຍາພາບໃນການບໍລິຫານລະບົບ ແລະ ເຊື່ອມຕໍ່ການບໍລິຫານງານຂອງແຕ່ລະສາຂາໄດ້ຢ່າງມີປະສິດຕິພາບ ແລະ ບໍລິສັດຈະສືບເນື່ອງພັດທະນາລະບົບການບໍລິຫານງານ ເພື່ອໃຫ້ໄດ້ມາດຕະຖານ ISO 2015 ເຂົ້າໃນການບໍລິຫານງານຂອງທຸກສາຂາ.

ອີງຕາມກົດໝາຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ກຳນົດໃຫ້ແຜນການດຳເນີນທຸລະກິດຂອງບໍລິສັດຕ້ອງໄດ້ຖືກຮັບຮອງໂດຍກອງປະຊຸມຜູ້ຖືຮຸ້ນ ລາຍລະອຽດຕາມເອກະສານປະກອບໃນວາລະທີ 3 ລວມທັງບໍລິສັດໄດ້ເຜີຍແຜ່ແຜນການດຳເນີນທຸລະກິດດັ່ງກ່າວ ລົງໃນເວັບໄຊ້ຂອງບໍລິສັດ ແລະ ເວັບໄຊ້ຂອງຕະຫຼາດຫຼັກຊັບລາວນຳ.

ທັງນີ້, ສະພາບໍລິຫານ ແລະ ຄະນະອຳນວຍການໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງເອົາແຜນການດຳເນີນທຸລະກິດປະຈຳປີ 2018.

ຫຼັງຈາກຜູ້ອຳນວຍການໃຫຍ່ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບ ຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ພະນັກງານແຄດເຊັຍ ຂາດຄວາມຮູ້ໃນການນຳໃຊ້ເຄື່ອງຮູດບັດເຄດິດເອົາບັດທະນາຄານໜຶ່ງໄປຮູດເງິນອີກທະນາຄານໜຶ່ງ ອັນເຮັດໃຫ້ລູກຄ້າມີຄ່າໃຊ້ຈ່າຍເພີ່ມຂຶ້ນໃນການຊຳລະເງິນ ຕ້ອງມີການແນະນຳແລະໃຫ້ຄວາມຮູ້ໃນການໃຊ້ເຄື່ອງຮູດບັດ ແລະ ການໃຊ້ບັດເຄດິດຄືນໃຫ້ແກ່ພະນັກງານແຄດເຊັຍ

- **ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມດຽວກັນນັ້ນ ກໍ່ເຫັນດີຕາມການແນະນຳ, ແລ້ວມອບໃຫ້ຄະນະກອງເລຂາບັນທຶກ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າປັບປຸງ ແລະ ເຮັດໃຫ້ການດຳເນີນງານຂອງບໍລິສັດດີຂຶ້ນກ່ອນເກົ່າ.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ໃນການເຂົ້າໄປໃຊ້ບໍລິການ ປ້າຍລາຄາຂອງສິນຄ້າລະບຸໄວ້ລາຄາໜຶ່ງ ເມື່ອໄປຊຳລະເງິນ ພົບວ່າບໍ່ຕົງກັນກັບປ້າຍລາຄາທີ່ລະບຸໄວ້ ອັນເນື່ອງມາຈາກການປ່ຽນປ້າຍລາຄາບໍ່ທັນ.

- **ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມກັບໄດ້ອະທິບາຍກ່ຽວກັບສາເຫດທີ່ເກີດຈາກການປ່ຽນແປງຂອງອັດຕາແລກປ່ຽນທີ່ຖີ່ຂຶ້ນ ແລະ ຊີ້ແຈ້ງກ່ຽວກັບວິທີແກ້ໄຂບັນຫາທີ່ເກີດຂຶ້ນເບື້ອງຕົ້ນ ຈາກນັ້ນມອບໃຫ້ຄະນະກອງເລຂາບັນທຶກ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າປັບປຸງ ແລະ ເຮັດໃຫ້ການດຳເນີນງານຂອງບໍລິສັດດີຂຶ້ນກ່ອນເກົ່າ.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ສຳລັບແຜນເພີ່ມຍອດຂາຍປີ 2018. ເປັນຫຍັງຈຶ່ງກຳນົດວ່າຍອດຂາຍໂດຍລວມຈະເພີ່ມຂຶ້ນ 20%.

- **ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມກັບໄດ້ອະທິບາຍສາເຫດເກີດຈາກການຂຽນອາດຈະບໍ່ລະອຽດ, ຄວາມໝາຍແມ່ນຍອດຂາຍສາຂາເກົ່າມີແຜ່ນເພີ່ມຂຶ້ນ 5% ຈາກຍອດຂາຍເດີມຂອງສາຂາເກົ່າ ແລະ ຍອດຂາຍຈາກສາຂາໃໝ່ເພີ່ມ 15% ຈາກຍອດຂາຍເດີມທັງໝົດຂອງບໍລິສັດ ເຊິ່ງວ່າຄວາມໝາຍສາຂາໃໝ່ແມ່ນສາຂາທີ່ຈະເປີດໃນປີ2018 ນີ້ກໍ່ຄືສາຂາປາກເຊ.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ແຜນການຕະຫຼາດເປັນຫ້ຍງຕ້ອງກຳນົດການໂຄສະນາພາຍໃນນະຄອນຫຼວງຫຼາຍກວ່າຕ່າງແຂວງ ທັງທີ່ນະຄອນຫຼວງລູກຄ້າກໍ່ຮູ້ຈັກຫຼາຍຢູ່ແລ້ວ.

- **ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມກັບໄດ້ອະທິບາຍສາເຫດ ເພາະວ່າທີ່ຕ້ອງໂຄສະນາສ້າງການຮັບຮູ້ໃຫ້ຫຼາຍໃນນະຄອນຫຼວງວຽງຈັນ ເຖິງແມ່ນວ່າຄົນໃນນະຄອນຫຼວງຈະຮັບຮູ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ຫຼາຍຢູ່ແລ້ວແຕ່ເຂົາເຈົ້າກໍ່ບໍ່ຮູ້ວ່າບໍລິສັດພວກເຮົາຂາຍສິນຄ້າໃໝ່ໆຫຍັງແດ່ ເພາະວ່າພວກເຮົາມີການເພີ່ມໝວດສິນຄ້າໃໝ່ເຂົ້າມາຢ່າງຫຼວງຫຼາຍ ແລະ ອີກທັງຜົນການສຳຫຼວດຂອງພວກເຮົາ ສຳລັບລູກຄ້າທີ່ຢູ່ທ່າງ່ອນເຊິ່ງວ່າເປັນເຂດໜຶ່ງໃນນະຄອນຫຼວງວຽງຈັນຍັງບໍ່ຮູ້ຈັກຮ້ານເຮົາ ດັ່ງນັ້ນເຮົາຈຶ່ງຈຳເປັນຕ້ອງໂຄສະນາ ແລະ ສ້າງການຮັບຮູ້ໃນນະຄອນຫຼວງຫຼາຍກວ່າຕ່າງແຂວງ.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ແຜນດ້ານການລົງທຶນ ເປັນຫຍັງໄລຍະເວລາຂອງແຜ່ນການລົງທຶນປີ 2016 ແລະ 2017 ຈຶ່ງບໍ່ຄືກັນທັງໆທີ່ເຄີຍລະບຸໄວ້ໃນບົດລາຍງານປີກ່ອນແລ້ວ ແລະ ຍ້ອນສາເຫດໃດຈຶ່ງເລື່ອນໄລຍະເວລາໃນການເປີດສາຂາອອກໄປ.

- **ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມກັບໄດ້ອະທິບາຍສາເຫດທີ່ມີການເລື່ອນໄລຍະການເປີດສາຂາອອກໄປ ເພາະເນື່ອງຈາກປະຈຸບັນສະພາບການກໍ່ສ້າງ ແລະ ເສດຖະກິດຂອງລາວເຮົາບໍ່ຄ່ອຍຈະດີປານໃດ, ພ້ອມດຽວກັນນັ້ນພາກການກໍ່ສ້າງຂອງລັດກໍ່ລົດລົງ ແລະ ພາກການກໍ່ສ້າງຂອງເອກະຊົນກໍ່ຂະຫຍາຍຕົວຊ້າກວ່າທີ່ຈະເປັນ ດັ່ງນັ້ນເພື່ອບໍ່ໃຫ້ກະທົບກັບຜົນປະກອບການ ພວກເຮົາຈຶ່ງໄດ້ເລື່ອນການເປີດບາງສາຂາອອກໄປເຊັ່ນ ສາຂາ ທ່າແຂກ ແລະ ສາຂາ ສະຫວັນນະເຂດ.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ຍຸດທະສາດ ຂອງອີງກອນ ດ້ານເນື້ອໃນຂອງການລາຍງານກ່ຽວກັບລະບົບ ISO VERSION 2008 ບໍ່ໄດ້ຖືກກ່າວເຖິງ ເປັນການກ່າວເຖິງແຕ່ ISO VERSION 2015 ເຊິ່ງອັນທີ່ຈິງຄວນເວົ້າເຖິງກ່ອນວ່າ ບໍ່ລິສັດ ໄດ້ມີການຮັບຮອງຈາກທາງລະບົບມາດຕະຖານ ISO 2008 ມາກ່ອນແລ້ວ ເພື່ອສ້າງຄວາມເຊື່ອຖືໃຫ້ກັບຜູ້ໃຊ້ບໍລິການ ແລະ ຜູ້ຖືຮຸ້ນ.

- **ທ່ານ ອັດດາມາ ສຸຄະບັນດິດ ຜູ້ອຳນວຍການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມດຽວກັນນັ້ນ ກໍ່ເຫັນດີຕາມການແນະນຳ, ແລ້ວມອບໃຫ້ຄະນະກອງເລຂາທີ່ກະກຽມກອງປະຊຸມ ພິຈາລະນາ ແລະ ປັບປຸງໃຫ້ລະອຽດຂຶ້ນຕື່ມອີກ.

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດປະຈຳປີ 2018 ໂດຍອາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ເຫັນດີ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2018.

<u>ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017.</u>

ປະທານສະພາບໍລິຫານແຈ້ງໃຫ້ກອງປະຊຸມຮັບຊາບວ່າ ຈາກບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2017 ແລະ ບົດລາຍງານການເງິນຂອງບໍລິສັດປະຈຳປີ 2017 ເຊິ່ງກອງປະຊຸມຜູ້ຖືຮຸ້ນໄດ້ຮັບຮອງໃນວາລະທີ 2 ແລ້ວ ເຫັນໄດ້ວ່າໃນປີ 2017 ທີ່ຜ່ານມາ ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຈຳນວນ 4.260.029.000 ກີບ ເມື່ອຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມ ລວມທັງໝົດຈຳນວນ 20 ສ່ວນຮ້ອຍຂອງກຳໄລສຸດທິແລ້ວ ເຫຼືອຈຳນວນ 3.408.023.200 ກີບ, ຈຶ່ງສະເໜີໃຫ້ມີການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີ ປິດປຶ້ມບັນຊີຜູ້ຖືຮຸ້ນ ແມ່ນວັນທີ 9 ມີນາ 2018 ໃນອັດຕາ 10 ກີບຕໍ່ຮຸ້ນ ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 1.704.011.600 ກີບ ຄິດໄລ່ແລ້ວແມ່ນ 50 ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມໂດຍກຳນົດວັນຈ່າຍເງິນປັນຜົນແມ່ນວັນທີ 3 ພຶດສະພາ 2018.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2017 ໂດຍອາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ອະນຸມັດໃຫ້ຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2017 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ແມ່ນວັນທີ 9 ມີນາ 2018 ໃນອັດຕາ 10 ກີບຕໍ່ຮຸ້ນ ລວມເປັນເງິນປັນຜົນຕ້ອງຈ່າຍທັງໝົດ 1.704.011.600 ກີບ ຄິດໄລ່ແລ້ວແມ່ນ 50 ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງສະສົມໂດຍກຳນົດວັນຈ່າຍເງິນປັນຜົນແມ່ນວັນທີ 3 ພຶດສະພາ 2018.

<u>ວາລະທີ 5. ພິຈາລະນາ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2018.</u>

ປະທານສະພາບໍລິຫານແຈ້ງໃຫ້ກອງປະຊຸມຮັບຊາບວ່າອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ , ລົງວັນທີ 26 ທັນວາ 2013 ແລະ ແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໃຫ້ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີຜູ້ກວດສອບບັນຊີພາຍນອກ ໂດຍຕ້ອງເປັນຜູ້ກວດສອບທີ່ໄດ້ຮັບການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງຜ່ານການເຫັນດີຂອງກອງປະຊຸມສະພາບໍລິຫານ, ຈຶ່ງສະເໜີໃຫ້ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປ້ີ ສ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2018 ໂດຍມີຄ່າຈ້າງເປັນເງິນບໍ່ກາຍ 50.000 ໂດລາສະຫະລັດ. ເນື່ອງຈາກ, ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປ້ີ ສ (ລາວ) ຈຳກັດຜູ້ດຽວ ແມ່ນເປັນຜູ້ກວດສອບບັນຊີໃຫ້ແກ່ບໍລິສັດມາແຕ່ການປະກາດຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ, ມີປະສົບການ, ມີຄວາມລະອຽດຮອບຄອບ, ມີຄວາມຊື່ສັດສຸດຈະລິດໃນໜ້າທີ່ ແລະ ເປັນບໍລິສັດກວດສອບບັນຊີທີ່ໄດ້ມາດຕະຖານ ລວມທັງໄດ້ຮັບຄວາມໄວ້ວາງໃຈໃນລະດັບສາກົນ ໃນສ່ວນຂອງຄ່າຈ້າງນັ້ນ ກໍ່ເປັນຈຳນວນທີ່ເໝາະສົມກັບວຽກງານໃນການກວດກາບັນຊີຂອງບໍລິສັດ ເຊິ່ງມີຈຳນວນຫຼວງຫຼາຍ ແລະ ເພື່ອໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ກວດສອບໄດ້ ຈຶ່ງມີຄວາມຈຳເປັນຕ້ອງນຳໃຊ້ບຸກຄະລາກອນທີ່ມີຄວາມຊ່ຽວຊານ ໂດຍບາງທ່ານກໍເປັນບຸກຄະລາກອນຈາກຕ່າງປະເທດນຳ. ທັງນີ້, ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປ້ີ ສ (ລາວ) ຈຳກັດຜູ້ດຽວ ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດມາແລ້ວ 4 ປີຕິດຕໍ່ກັນ ເລີ່ມແຕ່ປີ 2014 ຫາປະຈຸບັນ.

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2018 ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ອະນຸມັດໃຫ້ແຕ່ງຕັ້ງ ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ (ລາວ) ຈຳກັດຜູ້ດຽວ(PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດປະຈຳປີ 2018 ໂດຍມີຄ່າຈ້າງເປັນເງິນບໍ່ ກາຍ 50.000 ໂດລາສະຫະລັດ.

<u>ວາລະທີ 6. ພິຈາລະນາການແຕ່ງຕັ້ງສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ</u>

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ອີງຕາມໜັງສືແຈ້ງການຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0040/ ສຄຄຊ ລົງວັນທີ 30 ສິງຫາ 2017 ເລື່ອງ ຜົນການຕິດຕາມ ແລະ ທົບທວນກ່ຽວກັບສະພາບໍລິຫານ ແລະ ຄະນະກຳມະການ ຂອງສະພາບໍລິຫານ ຂອງບໍລິສັດຈົດທະບຽນໃຫ້ມີການປັບປຸງສະມາຊິກສະພາຜູ້ບໍລິຫານເພື່ອໃຫ້ສອດຄ່ອງກັບຂໍ້ຕົກລົງວ່າ ດ້ວຍສະພາບໍລິຫານບໍລິສັດຈົດທະບຽນ ສະບັບເລກທີ 0024/ຄຄຊ ລົງວັນທີ 26 ຕຸລາ 2016 ເຊິ່ງໄດ້ລະບຸໄວ້ແລ້ວວ່າ ສະມາຊິກສະພາບໍລິຫານຕ້ອງບໍ່ດຳລົງຕຳແໜ່ງເປັນຮອງຜູ້ອຳນວຍການຂອງບໍລິສັດຈົດທະບຽນເຖິງຢ່າງໃດກໍ່ຕາມກໍ່ເຫັນວ່າຍັງ ມີຂໍ້ຄົງຄ້າງທີ່ຈະຕ້ອງໄດ້ພິຈາລະນາ ແລະ ປັບປຸງໃຫ້ສອດຄ່ອງກັບລະບຽບການ ດັ່ງນັ້ນສະມາຊິກສະພາບໍລິຫານຈຳນວນ 4 ທ່ານ ໄດ້ແກ່ ທ່ານ ພັນໂນລາ ສຸຄະບັນດິດ, ທ່ານ ກິດສະດາ ສຸຄະບັນດິດ , ທ່ານ ວິທູນ ສຸຣິຍະວະນາກຸນ ແລະ ທ່ານ ວະຣິດ ຈິນຕະນາວັນ ຈຶ່ງໄດ້ລາອອກຈາກການເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຕາມໜັງສື ລາອອກຂອງສະມາຊິກສະພາບໍລິຫານທັງ 4 ທ່ານ, ສະບັບລົງວັນທີ 09 ກຸມພາ 2018 ຈຶ່ງເຮັດໃຫ້ສະມາຊິກສະພາບໍລິຫານ ຂອງບໍລິສັດເຫຼືອຈຳນວນທັງໝົດ 5 ທ່ານ ເປັນກໍລະນີທີ່ຕຳແໜ່ງສະມາຊິກສະພາບໍລິຫານວ່າງລົງ ໃນລະຫວ່າງນັ້ນກອງ ປະຊຸມສະພາບໍລິຫານເປັນຜູ້ພິຈາລະນາ ແລະ ສະເໜີເລືອກບຸກຄົນພາຍນອກທີ່ມີຄຸນນະສົມບັດເໝາະສົມເຂົ້າມາດຳລົງຕຳແ ໜ່ງ ເພື່ອໃຫ້ວຽກງານເປັນໄປຢ່າງມີປະສິດທິພາບໂດຍໃຫ້ສະມາຊິກສະພາບໍລິຫານທີ່ໄດ້ຮັບການແຕ່ງຕັ້ງນັ້ນມີອາຍຸການເທົ່າ ກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານທີ່ລາອອກໄປແລ້ວນັ້ນ.

ໃນກອງປະຊຸມສະພາບໍລິຫານຂອງບໍລິສັດ ຄັ້ງທີ 1/2018 ເຊິ່ງຈັດຂຶ້ນໃນວັນທີ 16 ກຸມພາ 2018 ກອງປະຊຸມໄດ້ມີມະຕິ ແຕ່ງຕັ້ງ ສະມາຊິກສະພາບໍລິຫານແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ ດັ່ງຕໍ່ໄປນີ້:

<u>ວາລະທີ 6.1 ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ວຽງດາລາ ບຸບຜາ ເປັນສະມາຊິກສະພາບໍລິຫານຂອງບໍລິສັດແທນ ສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ.</u>

ເນື່ອງຈາກ ທ່ານ ນາງ ວຽງດາລາ ບຸບຜາ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາທີ່ກຳລັງລົງຄະແນນນີ້ ຕາມກົດ ໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນ ການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ນາງ ວຽງດາລາ ບຸບຜາ ອອກຈາກກອງປະຊຸມກ່ອນຊົ່ວຄາວ.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ວຽງດາລາ ບຸບຜາ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 6.1

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ວຽງດາລາ ບຸບຜາ ແລ້ວ, ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

❖ **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ຄວນແຈ້ງສາເຫດໃນເອກະສານໃຫ້ລະອຽດກ່ຽວກັບການລາອອກພ້ອມກັນ ຂອງສະມາຊິກສາພະບໍລິຫານທັງ 4 ທ່ານ

- **ທ່ານ ປະທານກອງປະຊຸມ:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ພ້ອມດຽວກັນນັ້ນ ກໍ່ເຫັນດີຕາມການແນະນຳ, ແລ້ວມອບໃຫ້ຄະນະກອງເລຂາທີ່ກະກຽມກອງປະຊຸມ ພິຈາລະນາ ແລະ ປັບປຸງໃຫ້ລະອຽດຂຶ້ນຕື່ມອີກ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ນາງ ວຽງດາລາ ບຸບຜາ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ ແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 148.959.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ເຫັນດີ ແລະ ຮັບຮອງໃຫ້ ທ່ານ ນາງ ວຽງດາລາ ບຸບຜາ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນສະມາຊິກສະພາບໍລິຫານຄົນເກົ່າທີ່ລາອອກໄປໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານທີ່ລາອອກໄປແລ້ວນັ້ນ.

<u>ວາລະທີ 6.2</u> **<u>ພິຈາລະນາການແຕ່ງຕັ້ງ ທ່ານ ນາງ ຊຸຕິການ ສີແສງຈັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ.</u>**

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ຊຸຕິການ ສີແສງຈັນ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 6.2

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ຊຸຕິການ ສີແສງຈັນ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ນາງ ຊຸຕິການ ສີແສງຈັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ ແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ເຫັນດີ ແລະ ຮັບຮອງໃຫ້ ທ່ານ ນາງ ຊຸຕິການ ສີແສງຈັນ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນສະມາຊິກສະພາບໍລິຫານຄົນເກົ່າທີ່ລາອອກໄປໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານທີ່ລາອອກໄປແລ້ວນັ້ນ.

<u>ວາລະທີ 6.3</u> **<u>ພິຈາລະນາການແຕ່ງຕັ້ງ ທ່ານ ຄຳພອນ ພິລະພັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ.</u>**

ເນື່ອງຈາກ ທ່ານ ຄຳພອນ ພິລະພັນ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາທີ່ກຳລັງລົງຄະແນນນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ຄຳພອນ ພິລະພັນ ອອກຈາກກອງປະຊຸມກ່ອນຊົ່ວຄາວ.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ຄຳພອນ ພິລະພັນ ລາຍລະອຽດຕາມເອກະສານປະກອບການພິຈາລະນາວາລະທີ 6.3

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ຄຳພອນ ພິລະພັນ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ຄຳພອນ ພິລະພັນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ ແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.787.800 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ເຫັນດີ ແລະ ຮັບຮອງໃຫ້ ທ່ານ ຄຳພອນ ພິລະພັນ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນສະມາຊິກສະພາບໍລິຫານຄົນເກົ່າທີ່ລາອອກໄປໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານທີ່ລາອອກໄປແລ້ວນັ້ນ.

<u>ວາລະທີ 6.4</u> **<u>ພິຈາລະນາການແຕ່ງຕັ້ງ ທ່ານ ພິພິບ ວາດສະໜາອາຊາສະກຸນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ ແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ.</u>**

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ພິພິບ ວາດສະໜາອາຊາສະກຸນ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 6.4

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ພິພິບ ວາດສະໜາອາຊາສະກຸນ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ພິພົບ ວາດສະໜາອາຊາສະກຸນ ເປັນສະມາຊິກສະພາບໍລິຫານຂອງບໍລິສັດ ແທນສະມາຊິກສະພາບໍລິຫານຜູ້ເກົ່າທີ່ລາອອກໄປ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ເຫັນດີ ແລະ ຮັບຮອງໃຫ້ ທ່ານ ພິພົບ ວາດສະໜາອາຊາສະກຸນ ເປັນສະມາຊິກສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນສະມາຊິກສະພາບໍລິຫານຄົນເກົ່າທີ່ລາອອກໄປໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງສະມາຊິກສະພາບໍລິຫານທີ່ລາອອກໄປແລ້ວນັ້ນ.

<u>ວາລະທີ 7. ພິຈາລະນາການແຕ່ງຕັ້ງຮອງປະທານສະພາບໍລິຫານແທນຮອງປະທານສະພາບໍລິຫານຜູ້ເກົ່າທີ່ລາອອກໄປ</u>

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ເນື່ອງຈາກຮອງປະທານສະພາບໍລິຫານ ທ່ານ ວັດດານາ ສຸຄະບັນດິດ ໄດ້ລາອອກຈາກການເປັນຮອງປະທານສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈຶ່ງເຮັດໃຫ້ຕຳແໜ່ງຮອງປະທານສະພາບໍລິຫານຂອງບໍລິສັດ ວ່າງລົງ ໃນລະຫວ່າງນັ້ນກອງປະຊຸມສະພາບໍລິຫານ ຄັ້ງທີ 1/2018 ເຊິ່ງຈັດຂຶ້ນໃນວັນທີ 16 ກຸມພາ 2018 ເປັນຜູ້ພິຈາລະນາ ກອງປະຊຸມຈຶ່ງໄດ້ມີມະຕິແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເຊິ່ງເປັນຜູ້ມີຄວາມຮູ້ ແລະ ຄວາມສາມາດໃນດ້ານການເງິນ, ການບໍລິຫານ ແລະ ການບັນຊີ ລວມທັງມີປະສົບການໃນທຸລະກິດຈຳໜ່າຍວັດສະດຸກໍ່ສ້າງມາຫຼາຍປີ ເປັນຮອງປະທານສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ເນື່ອງຈາກ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາທີ່ກຳລັງລົງຄະແນນນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ນາງ ປະພັດສອນ ສຸຄະບັນດິດ ອອກຈາກກອງປະຊຸມກ່ອນຊົ່ວຄາວ.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 7

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນຮອງປະທານສະພາບໍລິຫານແທນຮອງປະທານສະພາບໍລິຫານຜູ້ເກົ່າທີ່ລາອອກໄປ ໂດຍອາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 148.959.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ</u>: ເຫັນດີ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ນາງ ປະພັດສອນ ສຸຄະບັນດິດ ເປັນຮອງປະທານສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແທນຮອງປະທານສະພາບໍລິຫານຄົນເກົ່າທີ່ລາອອກໄປ.

<u>ວາລະທີ 8. ພິຈາລະນາຂໍປິດການບໍລິການ ສາຂາ ທົ່ງຂັນຄຳ</u>

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ເນື່ອງຈາກວ່າສາຂາທົ່ງຂັນຄຳຈະມີການປິດບໍລິການ ສ່ວນວ່າສາຍເຫດຂອງການຂໍປິດບໍລິການສາຂາທົ່ງຂັນຄຳແມ່ນມອບໃຫ້ທາງ ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ເປັນຜູ້ນຳສະເໜີ.

- ເນື່ອງຈາກວ່າສະຖານທີ່ໂດຍລວມຂອງ ສາຂາ ທົ່ງຂັນຄຳ ແມ່ນມີພື້ນທີ່ໜ້ອຍປະມານ 144 ຕາແມັດ ນອກຈາກນີ້ບໍ່ວ່າຈະເປັນພື້ນທີ່ໂຊສິນຄ້າ, ສາງເກັບສິນຄ້າທີ່ມີພື້ນທີ່ຈຳກັດ ແລະ ບໍ່ມີສະຖານທີ່ຈອດລົດ ບໍ່ເໝາະສົມໃນການໃຫ້ບໍລິການລູກຄ້າ.
- ສາຂາ ທົ່ງຂັນຄຳ ສິນຄ້າຫລັກທີ່ຂາຍແມ່ນມີແຕ່ປະເພດສີ ແລະ ອຸປະກອນທີ່ໃຊ້ງານກ່ຽວກັບສີ ເຊິ່ງສິນຄ້າປະເພດດັ່ງກ່າວແມ່ນມີກຳໄລຕ່ຳ, ຮ້ານຄ້າທີ່ຂາຍສິນຄ້າປະເພດດຽວກັນກໍ່ມີຫຼາຍ ແລະ ການແຂ່ງຂັນທາງດ້ານລາຄາກໍ່ຮຸນແຮງເຊັ່ນດຽວກັນ ເຮັດໃຫ້ຜົນຕອບແທນຕໍ່ການລົງທຶນຕ່ຳ.
- ສາຂາ ໂພນຕ້ອງ, ສີໄຄ ແລະ ໂຊກໃຫຍ່ ຂອງພວກເຮົາກໍ່ຂາຍສິນຄ້າປະເພດດັ່ງກ່າວແລ້ວ ເຫັນໄດ້ວ່າບໍ່ຈຳເປັນຕ້ອງມີສາຂາທົ່ງຂັນຄຳກໍ່ໄດ້.
- ແນວໂນ້ມໃນການເພີ່ມຍອດຂາຍຂອງສາຂາກໍ່ເຫັນວ່າເປັນໄປໄດ້ຍາກ ແລະ ບໍ່ສາມາດຂະຫຍາຍໄດ້ຫຼາຍກວ່ານີ້ໄດ້ແລ້ວ ເນື່ອງຈາກປັດໃຈທາງດ້ານສະຖານທີ່ທີ່ບໍ່ເໝາະສົມໃນການດຳເນີນທຸລະກິດຂອງສາຂາທົ່ງຂັນຄຳເອງ.

ຫຼັງຈາກຮອງຜູ້ອຳນວນການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ໃນອາລະນີ້ເຫັນວ່າບໍ່ຈຳເປັນຕ້ອງເອົາມາຜ່ານກອງກະຊຸມສາມັນຜູ້ຖືຮຸ້ນ ເພາະບໍ່ແມ່ນການສະເໜີປ່ຽນວັດຖຸປະສົງຂອງບໍລິສັດ
- **ທ່ານ ວັດດານາ ສຸຄະບັນດິດ ຜູ້ອຳນວນການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ເຊິ່ງເປັນຄຳເຫັນທີ່ຕິດພັນກັນກັບລະບຽບການ ຈຶ່ງເຫັນວ່າຕ້ອງໄດ້ມາຜ່ານການເຫັນດີຈາກກອງປະຊຸມສາມັນຜູ້ຖືຮຸ້ນ ແລະ ຈຸດປະສົງກໍ່ເພື່ອເປັນບ່ອນອີງໃນການດຳເນີນການແກ້ໄຂທະບຽນວິສາຫະກິດຂອງບໍລິສັດ.

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດໃນການຂໍປົດບໍລິການສາຂາທົ່ງຂັນຄຳ ໂດຍວາລະນີ້ເປັນການລົງມະຕິແບບສະເພາະຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ2017 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງສອງສ່ວນສາມຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ຢ່າງໜ້ອຍແປດສິບສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ຄົນ (ສຽງ) ເທົ່າກັບ 0 ສ່ວນຮ້ອຍ ຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມທັງໝົດ ແລະ ບໍ່ເຫັນດີ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຮຸ້ນທີ່ຖອກແລ້ວທັງໝົດ ລົງຄະແນນສຽງເຫັນດີ ຈຳນວນ 89 ຄົນ (ສຽງ) ເທົ່າກັບ 100 ສ່ວນຮ້ອຍ ຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມທັງໝົດ ແລະ ເຫັນດີ ຈຳນວນ 149.799.700 ສຽງ ເທົ່າກັບ 90,79 ສ່ວນຮ້ອຍ ຂອງຮຸ້ນທີ່ຖອກແລ້ວທັງໝົດ.

<u>ມະຕິ</u>: ເຫັນດີ ແລະ ອະນຸມັດໃນການຂໍປົດບໍລິການສາຂາທົ່ງຂັນຄຳ.

<u>ວາລະທີ 9. ພິຈາລະນາຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ</u>

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ປະຈຸບັນບໍລິສັດແມ່ນໄດ້ມີການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ ເຊິ່ງວ່າໃນການດຳເນີນງານດັ່ງກ່າວຈະຕ້ອງໄດ້ອາໃສເຕັກນິກ, ຄວາມຊ່ຽວຊານ ແລະ ການສະໜອງວັດສະດຸອຸປະກອນທີ່ສຳຄັນຫຼາຍຢ່າງຈາກຕ່າງປະເທດຈຶ່ງເຮັດໃຫ້ເກີດບັນຫາ ແລະ ຄວາມຫຍຸ້ງຍາກຫຼາຍດ້ານ ດັ່ງນັ້ນຈຶ່ງໄດ້ເລັງເຫັນວ່າການຈຳໜ່າຍລິບ ແລະ ຂັ້ນໄດເລື່ອນ ແມ່ນບໍ່ສອດຄ່ອງກັບກິດຈະການຫຼັກຂອງບໍລິສັດ ເນື່ອງຈາກວ່າກິດຈະການຫຼັກຂອງບໍລິສັດ ແມ່ນເປັນການຂາຍສິນຄ້າ ແລະ ອຸປະກອນສຳລັບການກໍ່ສ້າງ ສ່ວນວ່າສາຍເຫດໃນການຂໍຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນແມ່ນມອບໃຫ້ທາງ ທ່ານ ພັນໂນລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ເປັນຜູ້ນຳສະເໜີ.

- ເນື່ອງຈາກບໍລິສັດຂອງພວກເຮົາແມ່ນດຳເນີນທຸລະກິດກ່ຽວກັບການຈຳໜ່າຍສິນຄ້າປະເພດວັດສະດຸກໍ່ສ້າງເປັນຫລັກ ແລະ ເຫັນວ່າໝວດສິນຄ້າດັ່ງກ່າວບໍ່ສອດຄ່ອງກັບກິດຈະການຫຼັກຂອງບໍລິສັດ.
- ຄ່າໃຊ້ຈ່າຍໃນການດຳເນີນທຸລະກິດຂອງໝວດສິນຄ້າດັ່ງກ່າວສູງ, ຈະຕ້ອງໄດ້ອາໃສເຕັກນິກ, ຄວາມຊ່ຽວຊານ ແລະ ການສະໜອງວັດສະດຸອຸປະກອນທີ່ສຳຄັນຫຼາຍຢ່າງຈາກຕ່າງປະເທດຈຶ່ງເຮັດໃຫ້ເກີດບັນຫາ ແລະ ຄວາມຫຍຸ້ງຍາກຫຼາຍດ້ານ.
- ປະຈຸບັນ, ໂຄງການກໍ່ສ້າງອາຄານຕຶກສູງໃນປະເທດເຮົາຍັງມີໜ້ອຍ ແລະ ສ່ວນໃຫຍ່ເປັນໂຄງການຂອງປະເທດຈີນຊຶ່ງແນ່ນອນການນຳໃຊ້ວັດສະດຸ ລິບ ແລະ ຂັ້ນໄດເລື່ອນ ກໍ່ແມ່ນຍີ່ຫໍ້ຂອງປະເທດຈີນເຊັ່ນດຽວກັນ ເພາະມີລາຄາທີ່ຖືກກ່ວາ ດັ່ງນັ້ນ, ແນວໂນ້ມໃນການເພີ່ມຍອດຂາຍຂອງໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນແມ່ນເຫັນໄດ້ວ່າເປັນໄປໄດ້ຍາກເນື່ອງຈາກ ປັດໃຈທາງດ້ານເຈົ້າຂອງໂຄງການ ແລະ ປັດໃຈທາງດ້ານລາຄາທີ່ແຂ່ງຂັນບໍ່ໄດ້.

ຫຼັງຈາກຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ໄດ້ກ່າວລາຍງານແລ້ວ ຈຶ່ງໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- **ຄຳຄິດເຫັນຈາກ ທ່ານ KRAIWAL KADAVANICH ຜູ້ຖືຮຸ້ນຈາກປະເທດໄທ:** ໃນວາລະນີ້ກໍ່ເຫັນວ່າບໍ່ຈຳເປັນຕ້ອງເອົາມາຜ່ານກອງກະຊຸມສາມັນຜູ້ຖືຮຸ້ນ ເພາະບໍ່ແມ່ນການສະເໜີປ່ຽນວັດຖຸປະສົງຂອງບໍລິສັດ.

- **ທ່ານ ອັດດາມາ ສຸຄະບັນດິດ ຜູ້ອຳນວນການໃຫຍ່:** ສະແດງຄວາມຂອບໃຈຕໍ່ກັບການປະກອບຄຳເຫັນຂອງ ທ່ານ KRAIWAL KADAVANICH ເຊິ່ງເປັນຄຳເຫັນທີ່ຕິດພັນກັນກັບລະບຽບການຄືວາລະທີ່ຜ່ານມາ ຈຶ່ງເຫັນວ່າຕ້ອງໄດ້ມາຜ່ານການເຫັນດີຈາກກອງປະຊຸມສາມັນຜູ້ຖືຮຸ້ນຄືກັນ ເພາະວ່າຈຸດປະສົງຫຼັກກໍ່ແມ່ນການລົດອັດຖຸປະສົງຂອງບໍລິສັດລົງນັ້ນກໍ່ແມ່ນການຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ ໂດຍວາລະນີ້ ເປັນການລົງມະຕິແບບສະເພາະຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ2017 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງສອງສ່ວນສາມຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ຢ່າງໜ້ອຍແປດສິບສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ຄົນ (ສຽງ) ເທົ່າກັບ 0 ສ່ວນຮ້ອຍ ຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມທັງໝົດ ແລະ ບໍ່ເຫັນດີ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຮຸ້ນທີ່ຖອກແລ້ວທັງໝົດ ລົງຄະແນນສຽງເຫັນດີ ຈຳນວນ 89 ຄົນ (ສຽງ) ເທົ່າກັບ 100 ສ່ວນຮ້ອຍ ຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມທັງໝົດ ແລະ ເຫັນດີ ຈຳນວນ 149.799.700 ສຽງ ເທົ່າກັບ 90,79 ສ່ວນຮ້ອຍ ຂອງຮຸ້ນທີ່ຖອກແລ້ວທັງໝົດ.

<u>ມະຕິ</u>: ເຫັນດີ ແລະ ອະນຸມັດ ຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ.

<u>ວາລະທີ 10.</u> <u>ພິຈາລະນາ ແຕ່ງຕັ້ງຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກຳມະການກຳນົດຄ່າຕອບແທນ</u>

ປະທານໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ເນື່ອງຈາກວ່າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຍັງຂາດຄະນະກຳມະການກວດສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ ແລະ ຄະນະກຳມະການກຳນົດຄ່າຕອບແທນ ສະນັ້ນແລ້ວທາງບໍລິສັດຈຶ່ງໄດ້ເລັງເຫັນເຖິງຄວາມສຳຄັນກ່ຽວກັບວຽກງານທາງດ້ານນີ້ ແລະ ເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນໄປຢ່າງມີປະສິດທິພາບ ໃນລະຫວ່າງນັ້ນກອງປະຊຸມສະພາຜູ້ບໍລິຫານ ຂອງບໍລິສັດ ຄັ້ງທີ 1/2018 ເຊິ່ງຈັດຂຶ້ນໃນວັນທີ 16 ກຸມພາ 2018 ຈຶ່ງໄດ້ພິຈາລະນາ ແລະ ເລືອກບຸກຄົນທີ່ມີຄຸນນະສົມບັດທີ່ເໝາະສົມ ເພື່ອເຂົ້າມາດຳລົງຕຳແໜ່ງ ລາຍລະອຽດດັ່ງຕໍ່ໄປນີ້.

<u>ວາລະທີ 10.1</u> <u>ພິຈາລະນາການ ແຕ່ງຕັ້ງ ທ່ານ ປະດິດ ວົງເສນາ ເປັນປະທານຄະນະກຳມະການກວດສອບ</u>

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ປະດິດ ວົງເສນາ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 10.1

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ປະດິດ ວົງເສນາ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ປະດິດ ວົງເສນາ ເປັນປະທານຄະນະກຳມະການກວດສອບຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ເຫັນດີ ແລະ ຮັບຮອງໃຫ້ ທ່ານ ປະດິດ ວົງເສນາ ເປັນປະທານຄະນະກຳມະການກວດສອບຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ວາລະທີ 10.2 ພິຈາລະນາການ ແຕ່ງຕັ້ງ ທ່ານ ວັດດານາ ສຸຄະບັນດິດ ເປັນປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ

ເນື່ອງຈາກ ທ່ານ ວັດດານາ ສຸຄະບັນດິດ ເປັນຜູ້ຖືຮຸ້ນ ແລະ ເປັນຜູ້ມີສ່ວນໄດ້ສ່ວນເສຍໃນບັນຫາທີ່ກຳລັງລົງຄະແນນນີ້ ຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ມາດຕາ 146 (4) ຈຶ່ງຖືກຈຳກັດສິດໃນການລົງຄະແນນສຽງ ແລະ ເພື່ອໃຫ້ການລົງຄະແນນສຽງເປັນໄປໂດຍຍຸຕິທຳ ແລະ ໂປ່ງໃສ ຈຶ່ງໄດ້ຂໍໃຫ້ ທ່ານ ວັດດານາ ສຸຄະບັນດິດ ອອກຈາກກອງປະຊຸມກ່ອນຊົ່ວຄາວ.

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ວັດດານາ ສຸຄະບັນດິດ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 10.2

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ວັດດານາ ສຸຄະບັນດິດ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ວັດດານາ ສຸຄະບັນດິດ ເປັນປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງຂອງບໍລິສັດ ໂດຍວາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 121.275.260 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ເຫັນດີ ແລະ ຮັບຮອງໃຫ້ ທ່ານ ວັດດານາ ສຸຄະບັນດິດ ເປັນປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ວາລະທີ 10.3 ພິຈາລະນາການ ແຕ່ງຕັ້ງ ທ່ານ ຄຳກົ່ງ ລ່ຽມພະຈັນ ເປັນປະທານຄະນະກຳມະການກຳນົດຄ່າຕອບແທນ

ປະທານໄດ້ອ່ານປະຫວັດໂດຍຫຍໍ້ຂອງ ທ່ານ ຄຳກົ່ງ ລ່ຽມພະຈັນ ລາຍລະອຽດຕາມເອກະສານປະກອບ ການພິຈາລະນາ ວາລະທີ 10.3

ຫຼັງຈາກປະທານສະພາບໍລິຫານໄດ້ກ່າວລາຍງານປະຫວັດໂດຍຫຍໍ້ຂອງ ທ່ານ ຄຳກົ່ງ ລ່ຽມພະຈັນ ແລ້ວ, ໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

- ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ

ຈາກນັ້ນ, ປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ ຄຳກົງ ລ່ຽມພະຈັນ ເປັນ ປະທານຄະນະກຳມະການກຳນົດຄ່າຕອບແທນຂອງບໍລິສັດ ໂດຍອາລະນີ້ກອງປະຊຸມຈະຕ້ອງລົງຄະແນນສຽງຮັບຮອງດ້ວຍ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກທີ່ໄດ້ມີການພິຈາລະນາເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີ ຈຳນວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີຈຳນວນ 149.799.700 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> ເຫັນດີ ແລະ ຮັບຮອງໃຫ້ ທ່ານ ຄຳກົງ ລ່ຽມພະຈັນ ເປັນປະທານຄະນະກຳມະການກຳນົດຄ່າຕອບແທນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

ບໍ່ມີເລື່ອງອື່ນໆ ທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ປະທານຈຶ່ງກ່າວປິດກອງປະຊຸມໃນເວລາ 16:50 ໂມງ.

(ທ່ານ ອຸ່ນ ຫຼ້າສຸກັນ)
ປະທານກອງປະຊຸມ

<u>ໄດ້ຮັບການກວດກາແລ້ວເຫັນວ່າຖືກຕ້ອງຈາກ:</u>

(ທ່ານ ວັດດານາ ສຸຄະບັນດິດ)
ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ບໍລິສັດ

(ທ່ານ ພັນໂນລາ ສຸຄະບັນດິດ)
ຮອງຜູ້ອຳນວຍການໃຫຍ່/ຜູ້ອຳນວຍການຝ່າຍການເງິນ

ເອກະສານປະກອບວາລະທີ 2: ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2018

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	8	8.873.646.944	6.419.034.448
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	9	15.759.344.828	17.638.531.080
ເຄື່ອງໃນສາງ, ສຸດທິ	10	192.544.408.281	147.717.645.836
ຊັບສິນໝຸນວຽນອື່ນໆ	11	5.789.722.614	7.767.536.365
ລວມຊັບສິນໝຸນວຽນ		222.967.122.667	179.542.747.729
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	12	490.347.457.551	460.349.989.027
ຊັບສິນຄົງທີ່ທີ່ບໍ່ມີຕົວຕົນ, ສຸດທິ	13	167.647.579	439.776.032
ຊັບສິນບໍ່ໝຸນວຽນອື່ນໆ		1.566.867.647	1.406.529.387
ລວມຊັບສິນບໍ່ໝຸນວຽນ		492.081.972.777	462.196.294.446
ລວມຊັບສິນ		**715.049.095.444**	**641.739.042.175**

ອັດດາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
ໃບລາຍງານຖານະການເງິນ
ວັນທີ 31 ທັນວາ 2018

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ໜີ້ສິນ ແລະ ທຶນຕົນເອງ			
ໜີ້ສິນໝຸນວຽນ			
ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ	15	57.561.798.309	43.792.632.441
ບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ	14	44.053.148.989	43.281.722.600
ສ່ວນໝຸນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ	15	7.199.814.350	252.010.000
ເງິນມັດຈຳຈາກລູກຄ້າ	17	25.868.305.744	24.729.063.838
ໜີ້ສິນໝຸນວຽນອື່ນໆ		10.333.441.565	6.392.523.550
ລວມໜີ້ສິນໝຸນວຽນ		145.016.508.957	118.447.952.429
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	15	21.831.908.085	354.800.090
ລວມໜີ້ສິນບໍ່ໝຸນວຽນ		21.831.908.085	354.800.090
ລວມໜີ້ສິນ		166.848.417.042	118.802.752.519
ທຶນຕົນເອງ			
ທຶນຈົດທະບຽນ			
ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ເງິນສຳຮອງຕາມກົດໝາຍ	20	3.652.027.345	3.332.971.187
ເງິນສຳຮອງອື່ນໆ	20	3.402.027.345	3.082.971.187
ກຳໄລຫ້າແບ່ງປັນ		149.927.522.108	149.025.072.849
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		36.483.376.882	12.759.549.711
ລວມທຶນຕົນເອງ		548.200.678.402	522.936.289.656
ລວມໜີ້ສິນ ແລະ ທຶນຕົນເອງ		**715.049.095.444**	**641.739.042.175**

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ອັດດາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 35 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ລາຍໄດ້ຈາກການຂາຍ		333.881.394.225	299.063.433.879
ລາຍໄດ້ຈາກການບໍລິການ		1.605.967.787	1.875.531.911
ຕົ້ນທຶນໃນການຂາຍ	21	(281.421.563.608)	(248.599.239.120)
ຕົ້ນທຶນໃນການບໍລິການ	21	(804.712.678)	(1.040.362.547)
ກຳໄລລວມຂັ້ນຕົ້ນ		**53.261.085.726**	**51.299.364.123**
ລາຍຮັບອື່ນໆ		5.603.556.218	4.346.876.845
ລາຍຈ່າຍໃນການຂາຍ	21	(28.865.208.947)	(30.209.619.011)
ລາຍຈ່າຍບໍລິຫານ	21	(24.284.445.657)	(20.855.956.388)
ລາຍຈ່າຍການເງິນ		(4.491.330.120)	(1.933.725.791)
ກຳໄລຈາກອັດຕາແລກປ່ຽນ, ສຸດທິ		1.966.904.355	531.145.525
ກຳໄລ ກ່ອນຈ່າຍອາກອນກຳໄລ		**3.190.561.575**	**3.178.085.303**
ອາກອນກຳໄລ		-	(389.301.333)
ກຳໄລສຸດທິໃນປີ		**3.190.561.575**	**2.788.783.970**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	23	20	17

ອັດສະໜ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພົນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

	ບິດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ລໍຖ້າແຈ່ງປັນ ກີບ	ຜົດຕ່ຽງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2017		330.000.000.000	24.735.724.722	2.906.968.288	2.656.968.288	150.388.294.677	(40.027.820.095)	470.660.135.880
ສຳຮອງເງິນຕາມກົດໝາຍ		-	-	426.002.899	-	(426.002.899)	-	-
ສຳຮອງເງິນອື່ນໆ		-	-	-	426.002.899	(426.002.899)	-	-
ກຳໄລສຸດທິໃນປີ		-	-	-	-	4.260.029.000	-	4.260.029.000
ຈ່າຍເງິນປັນຜົນ	24	-	-	-	-	(3.300.000.000)	-	(3.300.000.000)
ຜົດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	52.787.369.806	52.787.369.806
ດັດແກ້ຂໍ້ຜິດພາດ	4	-	-	-	-	(1.471.245.030)	-	(1.471.245.030)
ຍອດເຫຼືອໃນວັນທີ 30 ມິຖຸນາ 2017		330.000.000.000	24.735.724.722	3.332.971.187	3.082.971.187	149.025.072.849	12.759.549.711	522.936.289.656
ຍອດຍົກມາ ວັນທີ 1 ມັງກອນ 2018		330.000.000.000	24.735.724.722	3.332.971.187	3.082.971.187	149.025.072.849	-	522.936.289.656
ສຳຮອງເງິນຕາມກົດໝາຍ		-	-	319.056.158	-	(319.056.158)	-	-
ສຳຮອງເງິນອື່ນໆ		-	-	-	319.056.158	(319.056.158)	-	-
ກຳໄລສຸດທິໃນປີ		-	-	-	-	3.190.561.575	-	3.190.561.575
ຈ່າຍເງິນປັນຜົນ	24	-	-	-	-	(1.650.000.000)	-	(1.650.000.000)
ຜົດຕ່ຽງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	23.723.827.171	23.723.827.171
ຍອດເຫຼືອໃນວັນທີ 31 ທັນວາ 2018		330.000.000.000	24.735.724.722	3.652.027.345	3.402.027.345	149.927.522.108	36.483.376.882	548.200.678.402

ອັດຕາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 35 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ		3.190.561.575	2.788.783.970
ການດັດແກ້:			
ຄ່າຫຼ້ຍຫ້ຽນ	12	11.902.241.767	10.233.280.643
ຄ່າເຊື່ອມມູນຄ່າ	13	308.434.261	307.144.234
ກຳໄລຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		(104.097.362)	(124.663.895)
ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ		150.443.621	585.264.943
ລາຍຈ່າຍດອກເບ້ຍ		4.491.330.120	2.018.210.494
ສຳຮອງເຄື່ອງໃນສາງ	10	(2.337.256.219)	5.049.327.928
ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	9	(1.088.932.900)	76.041.109
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງເງິນທຶນໝຸນວຽນ		16.512.724.863	20.933.389.426
ການປ່ຽນແປງຈາກ ການດຳເນີນງານຂອງເງິນທຶນໝຸນວຽນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		3.920.693.630	2.558.437.576
- ເຄື່ອງໃນສາງ		(35.801.673.698)	(31.012.655.106)
- ຊັບສິນໝຸນວຽນອື່ນໆ		2.329.484.549	(2.086.613.552)
- ຊັບສິນບໍ່ໝຸນວຽນອື່ນໆ		(96.658.441)	203.453.956
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(1.188.129.022)	1.212.871.358
- ເງິນມັດຈຳຈາກລູກຄ້າ		19.647.584	(1.014.620.323)
- ໜີສິນໝຸນວຽນອື່ນໆ		3.462.234.731	5.904.313.474
ກະແສເງິນສົດໃຊ້ສຳລັບການດຳເນີນງານ		(10.841.675.804)	(3.301.423.191)
ຈ່າຍດອກເບ້ຍ		(4.302.064.709)	(2.018.210.494)
ຈ່າຍອາກອນກຳໄລ	16	(154.000.000)	(774.688.240)
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳ ການດຳເນີນງານ		(15.297.740.513)	(6.094.321.925)
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ			
ຊື້ຊັບສິນບັດຄົງທີ່		(21.057.619.375)	(52.614.172.047)
ຊື້ໂປຣແກຼມຄອມພິວເຕີ		(16.395.198)	(232.340.357)
ລາຍຮັບຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		104.090.768	124.896.100
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(20.969.923.805)	(52.721.616.304)

ອັດດາມ໊າ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

	ບິດ ອະທິບາຍ	2018 ກີບ	2017 (ດັດແກ້) ກີບ
ກະແສເງິນສົດຈາກກິດຈະກຳການເງິນ			
ລາຍຮັບຈາກ ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ		11.786.479.304	93.260.470.052
ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ		28.397.439.363	(52.357.670.944)
ຈ່າຍເງິນປັນຜົນ	24	(1.650.000.000)	(3.300.000.000)
ເງິນສົດສຸດທິຈາກກິດຈະກຳທາງການເງິນ		38.533.918.667	37.602.799.108
ໝຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		2.266.254.350	(21.213.139.122)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ		6.419.034.448	25.356.184.703
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		188.358.146	2.275.988.867
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍປີ		**8.873.646.944**	**6.419.034.448**
ລາຍການບໍ່ແມ່ນເງິນສົດ			
ໜີ້ຕ້ອງສົ່ງອື່ນໆ ຈາກການຊື້ຊັບສິນຄົງທີ່		574.895.993	233.080.100
ໜີ້ຕ້ອງສົ່ງດອກເບ້ຍ		189.265.411	-

ອັດຕານ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 22 ກຸມພາ 2019

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 22 ກຸມພາ 2019

ເອກະສານປະກອບວາລະທີ 3: ແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2019

- **ແຜນວຽກງານການຂາຍປະຈຳປີ 2019**

  ໃນປີ 2019 ບໍລິສັດມີແຜນສ້າງຍອດຂາຍໃຫ້ເຕີບໂຕ 12% ໂດຍໃນນີ້ເຕີບໂຕຈາກສາຂາເກົ່າ 5% ແລະ ໂດຍພະຍາຍາມຂະຫຍາຍໝວດສິນຄ້າທີ່ມີຄວາມຕ່ໍເນື່ອງກັນຫລາຍຂຶ້ນ ແລະ ຂະຫຍາຍຊ່ອງທາງຈຳໜ່າຍທາງ Online, ຮ້ານຄ້າ, ໂຄງການຕ່າງໆ ແລະ ລະບົບເງິນດາວໂດຍຜ່ານ ບໍລິສັດ AEON ແລະ ບໍລິສັດ ກຸງສີ ເຊົ່າສິນເຊື່ອ ໃຫ້ຫລາຍຂຶ້ນ ເພື່ອໃຫ້ທັນກັບສະພາບການແຂ່ງຂັນ ໃນປະຈຸບັນ ແລະ ພຶດຕິກຳການຊື້ຂອງລູກຄ້າ

- **ແຜນການຕະຫຼາດປະຈຳປີ 2019**

  1.1 ດ້ານສິນຄ້າເພີ່ມການສ້າງ House Brand ໃຫ້ຫລາຍຂຶ້ນເພື່ອໃຫ້ສາມາດແຂ່ງຂັນດ້ານລາຄາໄດ້ ແລະ ເພີ່ມກຳໄລ.

  1.2 ຈັດທຳໂປຼໂມຊັ່ນເພື່ອສະໜັບສະໜູນການຂາຍຢ່າງຕ່ໍເນື່ອງ ໂດຍຜ່ານ ກິດຈະກຳສົ່ງເສີມການຂາຍລາຍ 2 ເດືອນ, ໂປຣຂັ້ນບັນໃດ ແລະ ໂປຣສະສົມຄະແນນ.

  1.3 ໃນປີ 2019 ບໍລິສັດຈະສ້າງການຮັບຮູ້ຂອງລູກຄ້າຕ່ໍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຫລາຍຂຶ້ນໂດຍໃຊ້ທຸກຊ່ອງທາງເຊັ່ນ: ການເຮັດໃບປິວ, ປ້າຍໂຄສະນາ, Website, Facebook, Line, IG, YouTube, ວິທະຍຸທ້ອງຖິ່ນ, ການຈັດສຳມະນາຕ່າງໆຫລາຍຂຶ້ນ ເພື່ອສ້າງການຮັບຮູ້ Brand ໄປແຕ່ລະກຸ່ມເປົ້າໝາຍຊັດເຈນຂຶ້ນ.

  1.4 ສືບຕ່ໍເຮັດກິດຈະກຳຊ່ວຍເຫລືອສັງຄົມໃຫ້ຫລາຍຂຶ້ນໂດຍຜ່ານໂຄງການສ້າງຮອຍຍິ້ມດ້ວຍການແບ່ງປັນ.

- **ແຜນການດ້ານບຸກຄະລາກອນປະຈຳປີ 2019**

  ໃນປີ 2019 ແມ່ນຈະໄດ້ມີແຜນໃນການພັດທະນາຄວາມຮູ້ຄວາມສາມາດຂອງພະນັກງານໃຫ້ຫລາຍຂຶ້ນ ຂຶ້ນໂດຍສ້າງແຜນຝຶກອົບຮົມທຸກດ້ານທັງພາຍໃນ ແລະ ພາຍນອກ ເພື່ອຍົກສູງຄຸນນະພາບຂອງຊັບພະຍາກອນມະນຸດໃນບໍລິສັດໃຫ້ສາມາດແຂ່ງຂັນໄດ້ ແລະ ຕອບສະໜອງຄວາມຕ້ອງການຂອງລູກຄ້າ.

- **ແຜນການລົງທຶນປະຈຳປີ 2019**

  ບໍລິສັດ ມີແຜນການທີ່ຈະຂະຫຍາຍສາຂາຕື່ມ 1 ສາຂາໃນໄຕມາດ 01 ປີ 2020 ແລະ 1 ສາຂາໃນທ້າຍປີ 2021 ໂດຍຈະເປີດທີ່ສາຂາ ທ່າແຂກ ເປັນສາຂາທີ່ 6 ແລະ ສາຂາ ສະຫວັນນະເຂດ ເປັນສາຂາທີ່ 7 ທັງນີ້ເພື່ອຮອງຮັບຕະຫລາດຢູ່ພາກກາງຂອງປະເທດລາວ.

ລຳດັບ	ທີ່ຕັ້ງສາຂາ	ຂະໜາດ	ໄລຍະເວລາ
1	ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ	ເນື້ອທີ່ທັງໝົດ 7,760 ຕາແມັດ	ໄຕມາດ 01 2020
2	ບ້ານ ໂພນສ້າງເໜືອ, ເມືອງ ໄກສອນພິມວິຫານ, ແຂວງ ສະຫວັນນະເຂດ	ເນື້ອທີ່ທັງໝົດ 10,000 ຕາແມັດ	ທ້າຍປີ 2021

- ຮູບຂອງ ສາຂາ ທ່າແຂກ






- ຮູບຂອງ ສາຂາ ສະຫວັນນະເຂດ




- **ແຜນການພັດທະນາການຈັດການປະຈຳປີ 2019**

  ສຳລັບແຜນການພັດທະນາການຈັດການໃນປີ 2019 ແມ່ນສືບຕໍ່ປັບປຸງມາດຕະຖານຮ້ານ, ມາດຕະຖານການບໍລິການ,ລະບົບ ISO 2015 ແລະ 5 ສ ໃຫ້ມີມາດຕະຖານທີ່ສູງຂຶ້ນ, ຮັບຟັງຂໍ້ຕຳນິຕິຊົມຈາກລູກຄ້າ ເພື່ອນຳມາແກ້ໄຂຈຸດບົກຜ່ອງ ຖືລູກຄ້າເປັນສູນກາງໃນການຕອບສະໜອງຄວາມຕ້ອງການທັງດ້ານສິນຄ້າ ແລະ ບໍລິການ ນຳໃຊ້ລະບົບທັນສະໄໝພັດທະນາ IT ເພື່ອຮັບຮອງການປ່ຽນແປງທີ່ຜັນງານຕະຫລອດເວລາ.

ເອກະສານປະກອບວາລະທີ 6: ຊີວະປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ

ທ່ານທີ 1

ຊື່ - ນາມສະກຸນ	ທ່ານ ນາງ ປະພັດສອນ ສຸຄະບັນດິດ
ອາຍຸ	43 ປີ
ສັນຊາດ	ລາວ
ວຸດການສຶກສາ	- ປະລິນຍາຕີ ສາຂາວິສະວະກຳກໍ່ສ້າງ ມະຫາວິທະຍາໄລແຫ່ງຊາດ
ປະສົບການເຮັດວຽກ	- ຮອງຜູ້ອຳນວຍການຝ່າຍບຸກຄະລາກອນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຕຳແໜ່ງງານໃນປະຈຸບັນ	- ຮອງປະທານສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ວັນທີຮັບຕຳແໜ່ງ	17 ກຸມພາ 2017

ທ່ານທີ 2

ຊື່ - ນາມສະກຸນ	ທ່ານ ພິພົບ ວາດສະໜາອາຊາສະກຸນ
ອາຍຸ	49 ປີ
ສັນຊາດ	ໄທ
ວຸດການສຶກສາ	ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ
ຕຳແໜ່ງງານໃນປະຈຸບັນ	- ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ - ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House CL
ວັນທີຮັບຕຳແໜ່ງ	16 ກຸມພາ 2018

ທ່ານທີ 3

ຊື່ - ນາມສະກຸນ	ທ່ານ ປະດິດ ວົງເສນາ
ລາຍລະອຽດເພີ່ມເຕີມ	ກະລຸນາເບິ່ງປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ

ທ່ານທີ 4

ຊື່ - ນາມສະກຸນ	ທ່ານ ບຸນເຕີມ ກົມມິດຕະພາບ
ລາຍລະອຽດເພີ່ມເຕີມ	ກະລຸນາເບິ່ງປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ

ທ່ານທີ 5

ຊື່ - ນາມສະກຸນ	ທ່ານ ວັດດານາ ສຸຄະບັນດິດ
ອາຍຸ	53 ປີ
ສັນຊາດ	ລາວ
ວຸດການສຶກສາ	ປະລິນຍາໂທ ການບໍລິຫານ, ມະຫາວິດທະຍາໄລມະຫາສາຣະຄາມ, ປະເທດໄທ
ປະສົບການເຮັດວຽກ	ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຕຳແໜ່ງງານໃນປະຈຸບັນ ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັນທີຮັບຕຳແໜ່ງ 17 ກຸມພາ 2017

<u>ທ່ານທີ 6</u>

ຊື່ - ນາມສະກຸນ ທ່ານ ນາງ ສຸຕິການ ສີແສງຈັນ

ອາຍຸ 50 ປີ

ສັນຊາດ ໄທ

ວຸດການສຶກສາ ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ

ຕຳແໜ່ງງານໃນປະຈຸບັນ - ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີແລະການເງິນ Siam Global House PCL

ວັນທີຮັບຕຳແໜ່ງ 16 ກຸມພາ 2018

<u>ທ່ານທີ 7</u>

ຊື່ - ນາມສະກຸນ ທ່ານ ຄຳພອນ ພິລະພັນ

ອາຍຸ 47 ປີ

ສັນຊາດ ລາວ

ວຸດການສຶກສາ ປະລິນຍາຕີ ການບັນຊີ ວິທະຍາໄລ ເຕັກນິກປາກປ່າສັກ

ປະສົບການເຮັດວຽກ - ຜູ້ຈັດການຝ່າຍຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຕຳແໜ່ງງານໃນປະຈຸບັນ - ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັນທີຮັບຕຳແໜ່ງ 16 ກຸມພາ 2018

<u>ທ່ານທີ 8</u>

ຊື່ - ນາມສະກຸນ ທ່ານ ນາງ ວຽງດາລາ ບຸບຜາ

ອາຍຸ 42 ປີ

ສັນຊາດ ລາວ

ວຸດການສຶກສາ ປະລິນຍາຕີ ບໍລິຫານທຸລະກິດ ວິທະຍາໄລ ຄອມເຊັນເຕີ

ປະສົບການເຮັດວຽກ - ຮອງຜູ້ອຳນວຍການຝ່າຍຈັດຊື້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ຕຳແໜ່ງງານໃນປະຈຸບັນ - ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັນທີຮັບຕຳແໜ່ງ 16 ກຸມພາ 2018

<u>ທ່ານທີ 9</u>

ຊື່ - ນາມສະກຸນ ທ່ານ ອຸ່ນ ຫຼ້າສຸກັນ

ລາຍລະອຽດເພີ່ມເຕີມ ກະລຸນາເບິ່ງປະຫວັດຂອງສະມາຊິກອິດສະຫຼະ ເພື່ອການມອບສິດຂອງຜູ້ຖືຮຸ້ນ

ແຜນທີ່ສະຖານທີ່ຈັດປະຊຸມ

Lao Securities Exchange(LSX) Building , 4th floor Phonthan Neua Village, T4 Road, Saysettha District,
Vientiane Capital City. Lao P.D.R
P.O Box: 3373

Tel : +856 - 21 - 454361-4
Fax : +856 - 21 - 454360

